ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

23-29 ມັງກອນ 2023
ປີທີ 12
ສະບັບທີ 906
ລາຍສັປະດາ


## ປະທານສະພາແຫ່ງຊາດ ຢ້ຽມຢາມ ນາຍ ແລະ ພົນທະຫານ ກອງພົນທະຫານຣາບທີ 1



(ສພຊ) ໃນວັນທີ 17 ມັງກອນຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ພົບປະໂອ້ລົມຕໍ່ການນຳ, ພະນັກງານ ຫຼັກແຫຼ່ງ ນັກຮົບນາຍ ແລະ ພົນທະຫານກອງພົນທະຫານຣາບທີ 1 ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20 ມັງກອນ 1949-20 ມັງກອນ 2023) ໂດຍການຕ້ອນຮັບຂອງທ່ານ ພົນໂທ ປອ. ທອງລອຍ ສິລິວົງ ກຳມະການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ, ທ່ານ ຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງແຂວງວຽງຈັນ, ຄະນະພັກ-ຄະນະບັນຊາກອງພົນທະຫານຣາບທີ 1 ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ພົນຈັດຕະວາ ອຸ່ນໃຈ ແດງວັນສົມ ຫົວໜ້າການທະຫານກອງພົນທີ 1 ໄດ້ລາຍງານໃຫ້ຊາບໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດ, ທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ການເມືອງຂອງກົມກອງ, ລວມທັງຜົນງານທີ່ຍາດມາໄດ້ຕະຫຼອດໄລຍະຜ່ານມາ.

ໂອກາດດັ່ງກ່າວ, ທ່ານ ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງພົນທະຫານຣາບທີ 1 ເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນງານທີ່ກົມກອງຍາດມາໄດ້ ເຊິ່ງຕະຫຼອດໄລຍະເວລາຜ່ານມາ ກອງທັບປະຊາຊົນລາວ ໄດ້ຮັບການເຕີບໃຫຍ່ຂະຫຍາຍຕົວຮອບດ້ານ, ປະກອບສ່ວນສຳຄັນເຂົ້າໃນການຈັດຕັ້ງປະຕິບັດສອງໜ້າທີ່ຍຸດທະສາດ ຄືການ

ອ່ານຕໍ່ໜ້າ 2

## ກຳມາທິການການຕ່າງປະເທດ ສຳເລັດກອງປະຊຸມຄົບຄະນະ ປະຈຳປີ 2022



(ສພຊ) ໃນລະຫວ່າງວັນທີ 17-18 ມັງກອນ 2023 ກຳມາທິການການຕ່າງປະເທດສະພາແຫ່ງຊາດ ໄດ້ເປີດກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງຕົນຂຶ້ນ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ; ກອງປະຊຸມໄດ້ຮັບກຽດເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານການຕ່າງປະເທດສະພາແຫ່ງຊາດ; ພ້ອມກັນນັ້ນ, ກໍໄດ້ຮັບກຽດຢ່າງສູງຈາກທ່ານ ສະ

ອ່ານຕໍ່ໜ້າ 4

## ກອງປະຊຸມຄົບຄະນະກຳມາທິການຍຸຕິທຳ



(ສພຊ) ກອງປະຊຸມຄົບຄະນະກຳມາທິການຍຸຕິທຳ ປະຈຳປີ 2022 ຈັດຂຶ້ນທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໃນວັນທີ 13 ມັງກອນ 2023 ໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ພາຍຫຼັງທີ່ດຳເນີນມາເປັນເວລາ 1

ອ່ານຕໍ່ໜ້າ 4

## ກອງທັບປະຊາຊົນລາວ ເປັນເຄື່ອງມືອັນແຫຼມຄົມຂອງພັກ

(ສພຊ) ເນື່ອງໃນໂອກາດ ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20/01/1949-20/01/2023) ທ່ານ ພົທ. ສຸວອນ ເລືອງບຸນມີ ຄະນະປະຈຳສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ການສຳພາດແກ່ໜັງສືພິມ "ຜູ້ແທນປະຊາຊົນ" ຂອງສະພາແຫ່ງຊາດ ວ່າ: ກອງທັບປະຊາຊົນລາວແມ່ນໄດ້ຕິດພັນກັບປະຫວັດສາດອັນຍາວນານຫຼາຍພັນປີຂອງຊາດລາວ ແລະ ສືບທອດມູນເຊື້ອນຳໃຈຮັກຊາດອັນດູດດື່ມ, ມູນເຊື້ອສາມັກຄີ, ດຸໝັ່ນ ແລະ ພິລະອາດຫານຕ້ານກັບ

ອ່ານຕໍ່ໜ້າ 3

## 2 ພາກສ່ວນ ລົງນາມຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານ




(ສພຊ) ວັນທີ 16 ມັງກອນ 2022 ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີລົງນາມຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານລະຫວ່າງ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ

ອ່ານຕໍ່ໜ້າ 3

## ສຳເລັດກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ



(ສພຊ) ໃນວັນທີ 10 ມັງກອນ 2023 ທີ່ຫ້ອງປະຊຸມເຮືອນຮັບແຂກກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ໄດ້ສຳເລັດກອງປະຊຸມຄົບຄະນະ ປະ

ອ່ານຕໍ່ໜ້າ 8



ຫາລືວຽກງານພັດທະນາຊົນນະບົດ...

ອ່ານຕໍ່ໜ້າ 5



ສະມາຊິກພັກຕ້ອງຝຶກຝົນຫຼໍ່ຫຼອມ...

ອ່ານຕໍ່ໜ້າ 6



ຄລຂ ສະຫວັນນະເຂດ ຖະແຫຼງຂ່າວ...

ອ່ານຕໍ່ໜ້າ 7

ຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ (20/01/1949-20/01/2023) ຢ່າງສຸດໃຈ!

# ຍົກສູງຂີດຄວາມສາມາດ ໃນການຕິດຕາມກວດກາວຽກງານຍຸຕິທຳ



(ສພຊ) ວັນທີ 16-17 ມັງກອນ 2023, ທີ່ເມືອງວັງວຽງ ແຂວງວຽງຈັນ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ເປີດກອງປະຊຸມຍົກສູງຂີດຄວາມສາມາດໃນການຕິດຕາມກວດກາວຽກງານຍຸຕິທຳ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳ, ປະທານກຳມາທິການຍຸຕິທຳ; ເຂົ້າຮ່ວມມີທ່ານຮອງປະທານກຳມາທິການ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການຍຸຕິທຳ ຈາກ 18 ເຂດເລືອກຕັ້ງ, ມີຄະນະກົມ, ຄະນະພະແນກ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງ ເຊິ່ງກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມອາດສາມາດໃຫ້ແກ່ສະພາແຫ່ງຊາດ (WFD).

ທັງນີ້, ເພື່ອເຮັດໃຫ້ການຕິດຕາມກວດກາວຽກງານໃນຂົງເຂດຍຸຕິທຳ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີໝາກຜົນ ຈຶ່ງມີຄວາມຈຳເປັນເພີ່ມທະວີ ແລະ ຍົກສູງຄຸນນະພາບຂອງສະມາຊິກສະພາແຫ່ງຊາດທີ່ສັງກັດກຳມາທິການຍຸຕິທຳ ໃຫ້ຮັບຮູ້, ເຂົ້າໃຈ ແລະ ສາມາດປະຕິບັດພາລະບົດບາດຕິດຕາມກວດກາ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໄດ້ເປັນຢ່າງດີ; ຍົກສູງຂີດຄວາມສາມາດຂອງພະນັກງານ-ລັດຖະກອນ ຂອງກຳມາທິການຍຸຕິທຳ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ການຄົ້ນຄວ້າ, ເກັບກຳຂໍ້ມູນ, ວິເຄາະວິໄຈ ແລະ ສະໜອງຂໍ້ມູນກ່ຽວກັບການຕິດຕາມກວດກາວຽກງານຍຸຕິທຳ ໃຫ້ແກ່ຄະນະກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໃນການປະກອບຄຳເຫັນ,ຊັກຖາມໃນທີ່ປະຊຸມ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນໃນການຕິດຕາມກວດກາມີຜົນສັກສິດຍິ່ງຂຶ້ນ.

ໃນໂອກາດນີ້, ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ກອງປະຊຸມສຳມະນາຍົກສູງຂີດຄວາມສາມາດ ໃນການຕິດຕາມກວດກາວຽກງານຍຸຕິທຳຄັ້ງນີ້ ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເຫັນວ່າມີຄວາມໝາຍສຳຄັນ ເຖິງວ່າຈະມີເວລາຈຳກັດ; ສະນັ້ນ ເພື່ອເຮັດໃຫ້ບັນດາເນື້ອໃນຂອງກອງປະຊຸມໄດ້ຮັບພິຈາລະນາ, ຄົ້ນຄວ້າຢ່າງເລິກເຊິ່ງ ຮຽກຮ້ອງມາຍັງບັນດາທ່ານຄະນະນຳ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມ ຈົ່ງນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ຕໍ່ກັບບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມໃນຄັ້ງນີ້ ຢ່າງກົງໄປກົງມາ, ມີເຫດມີຜົນ ເພື່ອເຮັດໃຫ້ບັນດາເນື້ອໃນຕ່າງໆນັ້ນ ສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງຜັນຂະຫຍາຍ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າໃຫ້ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ.

ກອງປະຊຸມ, ໄດ້ຮັບຟັງການສະເໜີບົດການຕິດຕາມກວດກາຂອງສະພາແຫ່ງຊາດ ແລະການຕິດຕາມກວດກາວຽກງານຍຸຕິທຳ, ການສະເໜີບົດການຄົ້ນຄວ້າການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລາກອນຂອງສານປະຊາຊົນ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງສ້າງສັນ, ມີຈຸດສຸມ ແລະ ກົງໄປກົງມາ; ກອງປະຊຸມ ຍັງໄດ້ແລກປ່ຽນບົດຮຽນ ແລະ ປະສົບການຂອງບາງເຂດເລືອກຕັ້ງ ໃນການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາຂອງຄະນະກຳມະການຍຸຕິທຳ, ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ແລະ ແລກປ່ຽນບົດຮຽນການຕິດຕາມກວດກາໂດຍຜ່ານຄຳຮ້ອງຂໍຄວາມເປັນທຳ.

(ສຸພາວັນ ທອມສະນິດ)



## ປະທານ...

(ຕໍ່ຈາກໜ້າ 1)

ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ອັນແສນຮັກຂອງພວກເຮົາໃຫ້ຈະເລີນຮຸ່ງເຮືອງຢ່າງບໍ່ຢຸດຢັ້ງ. ສຳລັບສະພາແຫ່ງຊາດ ໄດ້ສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ຕະຫຼອດໄລຍະ 74 ປີ ແຫ່ງການຕໍ່ສູ້ ແລະ ເຄື່ອນໄຫວຢ່າງລຽນຕິດໃນເງື່ອນໄຂທີ່ຫຍຸ້ງຍາກລຳບາກ ແລະ ທຸລະກັນດານທີ່ສຸດນັ້ນ, ພາຍໃຕ້ການນຳພາຂອງພັກ, ບັນດາກຳລັງປະກອບອາວຸດປະຊາຊົນລາວ ໄດ້ເຮັດສຳເລັດພາລະກິດປະຕິວັດອັນຍິ່ງໃຫຍ່ ແລະ ໜັກໜ່ວງທີ່ພັກມອບໝາຍໃຫ້ຢ່າງສະຫງ່າງາມ, ສ້າງຜົນງານອັນດີເດັ່ນ, ວິລະກຳອັນລ້ຳເລີດປະດັບໄວ້ໃນໜ້າປະຫວັດສາດຂອງຊາດຢ່າງສົມກຽດ, ສ້າງມູນເຊື້ອອັນດີງາມຫຼາຍປະການໄວ້ໃຫ້ແກ່ກຳລັງປະກອບອາວຸດປະຕິວັດ. ສົມແລ້ວທີ່ເປັນກອງທັບວິລະຊົນຂອງຊາດລາວວິລະຊົນ ເຊິ່ງໄດ້ຮັບຄຳສັນລະເສີນຈາກພັກ ແລະ ລັດວ່າ: “ກອງທັບ ຍາມໃດກໍນຳໜ້າໃນທຸກວຽກງານ, ເດັດດ່ຽວຜ່ານຜ່າທຸກອຸປະສັກ, ຕີເອົາຊະນະສັດຕູທຸກໂຕ, ສຳເລັດທຸກໜ້າທີ່, ສົມເປັນກຳລັງແກ່ນສານທີ່ເຂັ້ມແຂງຂອງການປະຕິວັດ, ເປັນເຄື່ອງມືອັນແຫຼມຄົມຂອງພັກ”. ໄລຍະ 74 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປະກອບອາວຸດ, ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ແມ່ນປະຫວັດສາດແຫ່ງການທົດສອບອັນໃຫຍ່ຫຼວງ ໃນການຕໍ່ສູ້ອັນຍືດເຍື້ອຍາວນານ ເພື່ອຍາດເອົາຄວາມເປັນເອກະລາດແຫ່ງຊາດ; ຕະຫຼອດໄລຍະທາງອັນລະອິດລະອ້ຽວ, ຫຍຸ້ງຍາກລຳບາກທີ່ສຸດນັ້ນ, ແຕ່ກໍປ່ຽມລົ້ນໄປດ້ວຍຜົນງານ ແລະ ໄຊຊະນະອັນສະຫງ່າລາສີ; ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ, ກຳລັງປະກອບອາວຸດ ໄດ້ສາມັກຄີເປັນຈິດໜຶ່ງໃຈດຽວສູ້ຮົບຢ່າງພິລະອາດຫານ, ອອກແຮງປັບປຸງກໍ່ສ້າງກຳລັງຂອງຕົນໃຫ້ນັບມື້ເຂັ້ມແຂງ ແລະ ຂະຫຍາຍຕົວເປັນລຳດັບມາ.

ໃນຕອນທ້າຍ, ທ່ານ ຍັງໄດ້ຂໍຝາກຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ, ຄວາມຄິດຮອດຄິດເຖິງ, ຄວາມເປັນຫ່ວງເປັນໃຍ ມາຍັງບັນດາສະຫາຍຄະນະພັກ, ຄະນະນຳ, ນາຍ ແລະ ພົນທະຫານຂອງກອງພົນທີ I ທຸກທົ່ວໜ້າ ແລະ ຜ່ານບັນດາສະຫາຍ ໄປຍັງນາຍ ແລະ ພົນທະຫານ ທີ່ປະຈຳການຢູ່ເຂດທຸລະກັນດານ, ຫ່າງໄກສອກຫຼີກ ແລະ ບັນດາສະຫາຍທີ່ກຳລັງປິ່ນປົວສຸຂະພາບຢູ່ບັນດາໂຮງໝໍ ຂໍໃຫ້ບັນດາສະຫາຍຈົ່ງຫາຍດີໄວໆ ແລະ ກັບຄືນກົມກອງ ເພື່ອສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນ.

ຈາກນັ້ນ, ຄະນະ ຍັງໄດ້ນຳເອົາເຄື່ອງຊ່ວຍເຫຼືອປະເພດເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງກິລາ ຈຳນວນໜຶ່ງ ມອບໃຫ້ກົມກອງດັ່ງກ່າວ.

## ເລື່ອງ ເດັ່ນ ຂ່າວ ເດັດ

**# ຄັດໂດຍ: ທອມສະນິດ**

*❒ ຫວຽດນາມຈັດຢູ່ອັນດັບ 3 ໃນບັນດາປະເທດທີ່ມີການລົງທຶນຢູ່ລາວ(ຕໍ່ຈາກສປ ຈີນແລະໄທ)ເຊິ່ງການລົງທຶນຂອງຫວຽດນາມຢູ່ລາວເພີ່ມຂຶ້ນຕາມທິດໝັ້ນຄົງກວ່າເກົ່າ ປີ 2022 ຝ່າຍລາວ ໄດ້ອອກໃບອະນຸຍາດການລົງທຶນໃໝ່ 3 ໂຄງການ ແລະ ດັດແກ້ເພີ່ມທຶນ 3 ໂຄງການ ມູນຄ່າທຶນຈົດທະບຽນ 65,92 ລ້ານໂດລາ ເພີ່ມຂຶ້ນ 2,5 ເທື່ອ ທຽບໃສ່ປີ 2021 (26,4 ລ້ານໂດລາ) ຫຼາຍໂຄງການລົງທຶນຂອງວິສາຫະກິດຫວຽດນາມຢູ່ລາວ ເຄື່ອນໄຫວມີປະສິດທິຜົນເຊິ່ງໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທຳ ແລະ ເພີ່ມລາຍຮັບໃຫ້ແຮງງານຫຼາຍພັນຄົນ ປະກອບສ່ວນສ້າງແຫຼ່ງລາຍຮັບໃຫ້ງົບປະມານແຫ່ງລັດຂອງລາວ.*

***ນສພ. ວຽງຈັນໃໝ່ 12/01/2023***

*❒ ປີ 2022 ອົງການກາແດງແຫ່ງຊາດລາວ ໄດ້ປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ການສະໜອງເລືອດທີ່ປອດໄພ ໃນທົ່ວປະເທດມີຜູ້ບໍລິຈາກເລືອດໄດ້ທັງໝົດ 67.017 ຖົງ, ສູນເລືອດແຂວງໃນທົ່ວປະເທດລະດົມໄດ້ 35.747 ຖົງ, ຄາດໝາຍສູ້ຊົນ ປີ 2022 ຈຳນວນ 64.000 ຖົງ ສາມາດບັນລຸໄດ້ 104,71% ລື່ນຄາດໝາຍ ແລະ ມີຄອບຄົວຍາດຕິພີ່ນ້ອງມາບໍລິຈາກລວມທັງໝົດ 74.186 ຖົງ, ໄດ້ແຈກຢາຍເລືອດຄົນເຈັບທີ່ຕ້ອງການເລືອດເພື່ອປິ່ນປົວ ຈຳນວນ 55.000 ຄົນ ນຳໃຊ້ງົບປະມານໄປທັງໝົດ 50.734.348.385 ກີບ.*

***ນສພ. ປະຊາຊົນ 17/012023***

*❒ ອີງຕາມຂໍ້ມູນຈາກສູນຂໍ້ມູນຂ່າວສານດ້ານການຄ້າ ຂອງ ສປປລາວ ໃຫ້ຮູ້ວ່າ: ມູນຄ່າການນຳເຂົ້າ-ສົ່ງອອກສິນ ຄ້າ ຂອງ ສປປລາວ ປະຈຳເດືອນທັນວາ 2022 ບັນລຸໄດ້ປະມານ 1.088 ລ້ານໂດລາ. ໃນນີ້, ມູນຄ່າການສົ່ງອອກປະ ມານ 532 ລ້ານໂດລາ, ມູນຄ່າການນຳເຂົ້າປະມານ 556 ລ້ານໂດລາ, ເຮັດໃຫ້ ສປປລາວ ຂາດດູນການຄ້າ ປະມານ 23 ລ້ານໂດລາ (ໃນນີ້ຍັງບໍ່ລວມການສົ່ງອອກໄຟຟ້າ). ສິນຄ້າທີ່ສົ່ງອອກຫຼາຍກວ່າໝູ່ປະກອບມີ: ຄຳປະສົມ ແລະ ຄຳແທ່ງ, ມັນຕົ້ນ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ຢາງພາລາ, ເກືອກາລີ ແລະ ອື່ນໆ; ສ່ວນສິນຄ້ານຳເຂົ້າຫຼາຍກວ່າໝູ່ປະກອບມີ: ນ້ຳມັນກາຊວນ, ອຸປະກອນກົນຈັກ, ພາຫະນະທາງບົກ, ເຫຼັກ ແລະ ເຄື່ອງທີ່ເຮັດດ້ວຍເຫຼັກ, ເຄື່ອງດື່ມ ແລະ ອື່ນໆ; ສຳລັບປະເທດ ທີ່ ສປປລາວ ສົ່ງອອກ 5 ອັນດັບທຳອິດມີ: ຈີນ, ຫວຽດນາມ, ໄທ, ອົດຕຣາລີ ແລະ ສະຫະລັດອາເມຣິກາ ແລະ ປະເທດທີ່ນຳເຂົ້າ 5 ອັນດັບທຳອິດມີ: ໄທ, ຈີນ, ຫວຽດນາມ, ສະຫະລັດອາເມຣິກາ ແລະ ຍີ່ປຸ່ນ.*

***ນສພ. ປະຊາຊົນ 16/01/2023***

*❒ 1 ປີຜ່ານມາ, ສາມາດມ້າງຄະດີຄ້າມະນຸດ ດຳເນີນສຳເລັດ 26 ເລື່ອງ, ທຽບໃສ່ໂຕເລກຄະດີປີນີ້ກັບປີຜ່ານມາແມ່ນຫຼຸດລົງ; ພ້ອມນັ້ນ, ຍັງໄດ້ໃຫ້ການຊ່ວຍເຫຼືອກຸ່ມສ່ຽງ ແລະ ຜູ້ຖືກເຄາະຮ້າຍ ທາງດ້ານສະຖານທີ່ພັກເຊົາຊົ່ວຄາວ, ອາຫານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍອັນຈຳເປັນ, ການປິ່ນປົວດ້ານຮ່າງກາຍ, ບຳບັດຟື້ນຟູທາງດ້ານຈິດໃຈ. ຊ່ວຍເຫຼືອດ້ານກົດໝາຍ, ການສຶກສາ ແລະ ຝຶກວິຊາຊີບ ແລ້ວສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ. ປີ 2022 ມີຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດທີ່ ໄດ້ເຂົ້າມາບຳບັດຟື້ນຟູຢູ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍຈຳນວນ 95 ຄົນ ຍິງ 76 ຄົນ, ບໍລິການປິ່ນປົວ ແລະ ກວດສຸຂະພາບໃຫ້ຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງ ລວມທັງໝົດ 148 ຄົນ ຍິງ 140 ຄົນ, ຊ່ວຍເຫຼືອທາງດ້ານກົດໝາຍແກ່ຜູ້ຖືກເຄາະຮ້າຍ ຈຳນວນ 137 ຄັ້ງ ພ້ອມທັງໃຫ້ຄຳປຶກສາເຊິ່ງໜ້າ ແລະ ໃຫ້ຄຳປຶກສາທາງໂທລະສັບສາຍດ່ວນຕ່າງໆໄດ້ທັງໝົດ 285 ຄັ້ງ.*

***ນສພ. ປະຊາຊົນ 18/01/2023***



## ກອງທັບ...

(ຕໍ່ຈາກໜ້າ 1)

ການຮຸກຮານຈາກສັດຕູພາຍນອກ.

ກອງທັບປະຊາຊົນລາວ ໄດ້ກຳເນີດຂຶ້ນໃນຂະບວນການກະແສຟອງຂອງການປະຕິວັດເດືອນສິງຫາ 1954 ແລະ ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 20 ມັງກອນ 1949 ຢູ່ເຂດທີ່ໝັ້ນຖ້ຳແມ ເຂດລາວຮຸ່ງ-ພຽງສາ, ເມືອງຊຽງຄໍ້, ແຂວງຫົວພັນ ໃສ່ຊື່ວ່າ "ກອງລາດສະວົງ" ໂດຍແມ່ນປະທານ ໄກສອນ ພົມວິຫານ ເປັນຜູ້ປະກາດສ້າງຕັ້ງ ຢ່າງເປັນທາງການ ຕາມຄຳສັ່ງຂອງສູນກາງພັກຄອມມູນິດອິນດູຈີນ, ຕໍ່ມາໄດ້ເອົາສະຖານທີ່ດັ່ງກ່າວເປັນບ່ອນຈັດຕັ້ງພິທີປະກາດສ້າງຕັ້ງກອງທັບລາວອິດສະຫຼະຂຶ້ນຢ່າງເປັນທາງການ, ບັນດາກອງເອກະລາດເຊັ່ນ: ກອງໄຊຈັກກະພັດ, ກອງຝ້າງຸ່ມ, ກອງປັດໃຈ, ກອງໄຊເສດຖາ ກໍໄດ້ປະກາດໂຮມເຂົ້າເປັນກອງທັບລາວອິດສະຫຼະ ຢ່າງເປັນທາງການ ພາຍໃຕ້ການນຳພາໂດຍກົງຂອງສາຂາພັກຄອມມູນິດອິນດູຈີນ ປະຈຳລາວ.

ການຕໍ່ສູ້ຕ້ານກັບການຮຸກຮານຂອງຈັກກະພັດອາເມລິກາ ແຕ່ປີ 1954-1975 ໄດ້ມີ 2 ເຫດການ ຄື ການຜ່າວົງປິດລ້ອມຂອງກອງພັນທີ 2 ຂອງຝ່າຍປະເທດລາວ ຢູ່ທົ່ງໄຫຫີນຊຽງຂວາງ ແລະ ຜູ້ນຳແນວລາວຮັກຊາດໂຕນອອກຈາກຄຸກໂພນເຄັງ; ຫຼັງຈາກນັ້ນ, ກອງທັບເຮົາໄດ້ປ່ຽນຊື່ຈາກກອງທັບລາວອິດສະຫຼະ ມາເປັນກອງທັບປະຊາຊົນລາວ ແລະ ມີ 5 ຂັ້ນຮົບໃຫຍ່ ຄື ຂັ້ນຮົບປົດປ່ອຍຫຼວງນ້ຳທາ ເດືອນພຶດສະພາ ປີ 1962; ຂັ້ນຮົບນ້ຳບາກ ເດືອນມັງກອນ ປີ 1968; ຂັ້ນຮົບຜາທີ່ ເດືອນມີນາ ປີ 1968; ຂັ້ນຮົບກູ້ກຽດ, ປົດປ່ອຍທົ່ງໄຫຫີນ ແຕ່ເດືອນທັນວາ 1969 ເຖິງເດືອນເມສາ 1971 ແລະ ຂັ້ນຮົບລາມເຊີນ 719 ເດືອນມີນາ 1971.

ແຕ່ປີ 1975-1985 ເປັນໄລຍະຕົ້ນແຫ່ງການປະຕິບັດໜ້າທີ່ຕົ້ນຕໍໃນໄລຍະນີ້ ແມ່ນຮີບຮ້ອນຈັດຕັ້ງ ແລະ ກໍ່ສ້າງອຳນາດການປົກຄອງໃໝ່ ຢູ່ທຸກຂັ້ນ, ແກ້ໄຂຜົນຮ້າຍຂອງສົງຄາມ, ສືບຕໍ່ປັບປຸງກໍ່ສ້າງກອງທັບໃຫ້ແທດເໝາະກັບສະພາບການໃໝ່, ເປີດກອງປະຊຸມຍ້ອງຍໍສັນລະເສີນຜົນງານກົມກອງລວມໝູ່ ແລະ ບຸກຄົນດີເດັ່ນ (ມອບນາມມະຍົດວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນທົ່ວປະເທດ), ຈັດຕັ້ງພິທີປະດັບຊັ້ນໃຫ້ແກ່ນາຍທະຫານ ໃນກອງທັບ ແລະ ຕຳຫຼວດ, ປ່ຽນຊື່ຈາກກອງທັບປົດປ່ອຍປະຊາຊົນລາວເປັນກອງທັບປະຊາຊົນລາວ, ປະກາດສ້າງຕັ້ງ 5 ກອງພົນທະຫານຮາບ ແລະ 4 ກອງພັນໃຫຍ່ເອກະລາດ.

ແຕ່ປີ 1986-2000 ເປັນໄລຍະສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ ຂອງພັກ ກໍຄື ກອງທັບໄດ້ເປັນຫຼັກແຫຼ່ງໃນການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຂອງພັກ, ເຂົ້າຮ່ວມການປັບປຸງກໍ່ສ້າງຮາກຖານການເມືອງຢ່າງຕັ້ງໜ້າສຸມໃສ່ນະຄອນຫຼວງວຽງຈັນ, ແຂວງໄຊຍະບູລີ ແລະ ແຂວງຈຳປາສັກ, ເຄື່ອນໄຫວແກ້ໄຂຄວາມບໍ່ສະຫງົບ ຢູ່ເຂດທຸລະກັນດານຫ່າງໄກສອກຫຼີກ, ຕີຕ້ານ ແລະ ປົກປັກຮັກສາການບຸກຕີບຽດຍຶດຊາຍແດນທິດຕາເວັນຕົກ (ບໍລິເວນ 3 ໝູ່ບ້ານ, ເມືອງປາກລາຍ ແລະ ບໍລິເວນນາບໍ່ນ້ອນ, ເມືອງບໍ່ແຕນ, ແຂວງໄຊຍະບູລີ), ກວາດລ້າງພວກປະຕິການພັດຖິ່ນຫວຽດນາມ, ກຳປູເຈຍ ທີ່ເຄື່ອນໄຫວຢູ່ບັນດາແຂວງພາກໃຕ້ລາວ.

ປີ 2000-2023 ສືບຕໍ່ປະຕິບັດ 2 ໜ້າທີ່ຍຸດທະສາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນເງື່ອນໄຂສະພາບການໃໝ່-ປັບປຸງກຳລັງກອງທັບໄປຕາມທິດປະຕິວັດ, ມີແບບ ແຜນ ແລະ ທັນສະໄໝ ຄື: ສືບຕໍ່ເປັນເຈົ້າການປະຕິບັດແນວທາງ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານຂອງພັກ, ເຮັດໃຫ້ປະເທດຊາດມີຄວາມສະຫງົບໂດຍພື້ນຖານ ໂດຍສຸມໃສ່ການປັບປຸງວຽກງານ ປກຊ-ປກສ ຢູ່ຂັ້ນຮາກຖານ ຕິດພັນກັບການກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ, ກໍ່ສ້າງແນວຫຼັງຍຸດທະສາດ, ພັດທະນາເຂດຈຸດສຸມ ຕາມບໍລິເວນຊາຍແດນ ແລະ ເຂດຫ່າງໄກສອກຫຼີກ, ທຸລະກັນດານ, ກໍ່ສ້າງປັບປຸງໂຄງລ່າງພື້ນຖານ (ຄ້າຍຄູ, ວິທະຍາຄານ, ໂຮງຮຽນ, ສະໜາມແອບ, ສ້າງຄັງ ແລະ ອື່ນໆ...); ການກໍ່ສ້າງກຳລັງຖືເອົາການກໍ່ສ້າງທາງດ້ານການເມືອງເປັນກົກ, ຮັກສາທາດແທ້ມູນເຊື້ອປະຕິວັດ, ຈົ່ງຮັກພັກດີ, ບໍລິສຸດສັດຊື່ຕໍ່ພັກ, ຕໍ່ປະເທດຊາດ ເຮັດສຳເລັດທຸກໜ້າທີ່ ແລະ ຝຶກແອບຮ່ຳຮຽນສິນລະປະຍຸດ, ຍຸດທະວິທີ, ຍົກສູງຄວາມສາມາດການກຽມພ້ອມສູ້ຮົບ ໃຫ້ທຸກກຳລັງ, ທຸກເຫຼົ່າຮົບຊຳນິຊຳນານໃນການນຳໃຊ້ພາຫະນະອາວຸດເຕັກນິກການທະຫານ ທີ່ທັນສະໃໝ; ຈັດຕັ້ງປະກອບດ້ານກຳລັງ ແລະ ພາຫະນະອາວຸດເຕັກນິກ ໃຫ້ສົມຄູ່ ແລະ ແທດເໝາະກັບສະພາບການໃນໄລຍະໃໝ່ ແລະ ຄວາມສາມາດຕົວຈິງ ດ້ານເສດຖະກິດ ຂອງຊາດ.

ຈາກຜົນງານ ແລະ ວິລະກຳອັນຍິ່ງໃຫຍ່ຕະຫຼອດໄລຍະຫຼາຍທົດສະວັດຜ່ານມານັ້ນ ໄດ້ເຮັດໃຫ້ກອງທັບເຮົາກາຍເປັນກອງທັບ ທີ່ມີທາດແທ້ປະຕິວັດ, ທາດແທ້ຂອງຊົນຊັ້ນກຳມະກອນ ແລະ ທາດແທ້ຂອງປະຊາຊົນຢ່າງແທ້ຈິງ ແລະ ສ້າງໄດ້ມູນເຊື້ອອັນສະຫງ່າອົງອາດນັ້ນ. ດັ່ງນັ້ນ ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ: **"ເວລາໃດກອງທັບກໍ່ນຳໜ້າ ໃນທຸກວຽກງານ, ເດັດດ່ຽວໝຽວແໜ້ນຜ່ານຜ່າອຸປະສັກ, ສຳເລັດທຸກ ໜ້າທີ່ ຕີເອົາຊະນະສັດຕູທຸກໂຕ, ສົມແລ້ວເປັນກຳລັງແກ່ນສານ ຂອງການປະຕິວັດ ເປັນເຄື່ອງມືອັນແຫຼມຄົມຂອງພັກ"**

ໃນໂອກາດອັນສະຫງ່າລາສີນີ້. ຂໍສະແດງຄວາມຮູ້ບຸນຄຸນອັນລົ້ນເຫຼືອ ຕໍ່ພັກປະຊາຊົນປະຕິວັດລາວ ທີ່ໄດ້ນຳພາ, ສຶກສາອົບຮົມ, ກໍ່ສ້າງກອງທັບປະຊາຊົນລາວ ຕະຫຼອດໄລຍະທີ່ຜ່ານມາ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຍາດໄດ້ໄຊຊະນະ ສ້າງວິລະກຳອັນຍິ່ງໃຫຍ່ໃຫ້ແກ່ປະເທດຊາດ ໃນການເປັນກຳລັງແກ່ນສານຂອງການປະຕິວັດ, ເປັນເຄື່ອງມືອັນແຫຼມຄົມຂອງພັກ.

ໃນຕອນທ້າຍ, ທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ປະຊາຊົນລາວບັນດາເຜົ່າ, ອຳນາດການປົກຄອງ, ອົງການຈັດຕັ້ງພັກ-ລັດທຸກຂັ້ນ ທີ່ໄດ້ໃຫ້ການອູ້ມຊູຊ່ວຍເຫຼືອກອງທັບຕະຫຼອດໄລຍະທີ່ຜ່ານມາ, ເຮັດໃຫ້ກອງທັບເຮົາມີກຳລັງແຮງ, ກຳລັງໃຈ ເສີມຂະຫຍາຍມູນເຊື້ອເດັດດ່ຽວໝຽວແໜ້ນ "ຍາກປານໃດກໍ່ບຸກ, ທຸກປານໃດກໍ່ສູ້ເຖິງຈະເສຍສະຫຼະກໍບໍ່ຫວາດຫວັ່ນ" ແລະ ເຮັດສຳເລັດທຸກໜ້າທີ່.

ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂໍສົ່ງພອນໄຊອັນປະເສີດມາຍັງພະນັກງານ-ນັກຮົບ ທຸກທົ່ວໜ້າ, ທຸກກຳລັງ, ທຸກເຫຼົ່າຮົບ ຈົ່ງເຂັ້ມແຂງ, ຫ້າວຫັນ, ກ້າວຂຶ້ນເສີມຂະຫຍາຍທາດແທ້ມູນເຊື້ອຕໍ່ສູ້ພິລາດອາດຫານຊານໄຊ, ນ້ຳໃຈຮັກເຊື້ອຊາດ, ຄວາມຈົ່ງຮັກພັກດີ ຕໍ່ປະເທດຊາດ, ຕໍ່ພັກ, ຕໍ່ປະຊາຊົນ, ຍົກສູງສະຕິລະວັງຕົວກຽມພ້ອມທັບມ້າງທຸກກົນອຸບາຍມ້າງເພທຳລາຍຂອງພວກສັດຕູ, ເດັດດ່ຽວປົກປັກຮັກສາເອກະລາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມສະຫງົບສຸກຂອງປະຊາຊົນ, ອອກແຮງປັບປຸງກໍ່ສ້າງກຳລັງໃຫ້ໜັກແໜ້ນເຂັ້ມແຂງຕາມທິດສ້າງກອງທັບປະຕິວັດ, ມີແບບແຜນ ແລະ ທັນສະໄໝ.



## 2 ພາກສ່ວນ...

(ຕໍ່ຈາກໜ້າ 1)

ກັບກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງລົງນາມໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ທ່ານ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້; ເຂົ້າຮ່ວມເປັນສັກຂີພິຍານມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານປະທານ-ຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ, ພະນັກງານ-ລັດຖະກອນ ແລະ ພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ແລະ ທ່ານ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ລົງລາຍເຊັນຮ່ວມກັນເປັນລາຍລັກອັກສອນ ເຖິງວ່າໄລຍະຜ່ານມາ ກຳມາທິການ ແລະ ກະຊວງ ໄດ້ມີການພົວພັນ, ປະສານງານ ແລະ ເຮັດວຽກຮ່ວມກັນ ຢ່າງໃກ້ສິດ ມາໂດຍຕະຫຼອດ ໂດຍສະເພາະການຄົ້ນຄວ້າບັນຫາຕ່າງໆ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນ, ສະໄໝວິສາມັນ ຂອງສະພາແຫ່ງຊາດ, ແຕ່ພວກເຮົາກໍຍັງບໍ່ທັນມີນິຕິກຳສະເພາະທີ່ເປັນບ່ອນອີງ ໃນການພົວພັນປະສານງານເຊິ່ງກັນແລະກັນ.



ຂໍ້ຕົກລົງຮ່ວມສະບັບດັ່ງກ່າວ ໄດ້ກຳນົດກ່ຽວກັບຫຼັກການ, ຂອບເຂດ, ລະບຽບການ, ເນື້ອໃນ, ຂັ້ນຕອນ, ວິທີການປະສານງານ ລະຫວ່າງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ກັບ ກະຊວງກະສິກຳ ແລະ ປ່າໄມ້ ໃນການຄົ້ນຄວ້າ, ປຶກສາຫາລື, ສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ໃນການກະກຽມເນື້ອໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ທີ່ຕິດພັນກັບວຽກງານກະສິກຳ ແລະ ປ່າໄມ້ ເຊິ່ງຈະເປັນການອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ລັດຖະບານ ຕາມພາລະບົດບາດ, ໜ້າທີ່ ແລະ ສິດ ຂອງຕົນ ແນໃສ່ຮັບປະກັນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໃນການປະຕິບັດໜ້າທີ່ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນດີ.

(ຂ່າວ: ນາງ ກຸກກິກ ບຸດດາໄຊ ແລະ ພາບ: ສອນສັກ ວັນວິໄຊ)

# ຮອງປະທານກຳມາທິການກົດໝາຍ ເຄື່ອນໄຫວຢູ່ 2 ແຂວງພາກເໜືອ



(ສພຊ) ໃນລະຫວ່າງວັນທີ 9-12 ມັງກອນ 2023, ທ່ານ ອຳໄພ ຈິດມານີນ ຮອງປະທານກຳມາທິການກົດໝາຍ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ ຢູ່ 2 ແຂວງພາກເໜືອ ຄື: ຜົ້ງສາລີ ແລະ ອຸດົມໄຊ ໂດຍໄດ້ຮັບການຕ້ອນຮັບ ແລະ ເຂົ້າຮ່ວມຈາກທ່ານ ສົມຈິດ ຫັບລະກອນ ຮອງປະທານສະພາປະຊາຊົນແຂວງຜົ້ງສາລີ ແລະ ທ່ານ ສົມຈິດ ປັນຍາຮັກ ຮອງເຈົ້າແຂວງອຸດົມໄຊ ພ້ອມດ້ວຍບັນດາທ່ານຕາງໜ້າຈາກພະແນກການ, ອົງການຈັດຕັ້ງອ້ອມຂ້າງແຂວງດັ່ງກ່າວ ແລະ ແຂກທີ່ຖືກເຊີນ.

ທັງນີ້, ເພື່ອເປັນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂອງພະແນກການ. ອົງການຂັ້ນແຂວງ ພາຍຫລັງກົດໝາຍ ໄດ້ຮັບການປະກາດໃຊ້ແລ້ວ ແລະ ການເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ ແນໃສ່ສ້າງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນສັງຄົມ ໃຫ້ນັບມື້ສູງຂຶ້ນ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ສັງລວມເປັນຂໍ້ມູນລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ.

ຜ່ານການເຄື່ອນໄຫວຕິດຕາມກວດກາຄັ້ງນີ້, ຄະນະໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດກົດໝາຍວ່າທະບຽນຄອບຄົວ; ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈະລາຈອນທາງບົກ; ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ; ກົດໝາຍວ່າດ້ວຍການລົງທຶນຂອງລັດ; ກົດໝາຍວ່າດ້ວຍຢາເສບຕິດ; ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຈາກບັນດາທ່ານຜູ້ຕາງໜ້າພະແນກ, ອົງການອ້ອມຂ້າງແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ ແລະ ທ່ານຮອງປະທານກຳທິການກົດໝາຍ ກໍໄດ້ເຜີຍແຜ່ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ມະຕິຄະນະປະຈຳສະພາແຫ່ງຊາດວ່າດ້ວຍການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ; ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ; ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາ ການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ; ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ສົນທະນາ, ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ເພື່ອຖອດຖອນແລກປ່ຽນບົດຮຽນ ແລະ ສະເໜີບັນຫາຕ່າງໆທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກົດໝາຍກ່ຽວກັບຂົງເຂດພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະແນກ ແລະ ອົງການຂອງຕົນ.

ນອກຈາກນີ້, ຄະນະ ຍັງໄດ້ລົງເຄື່ອນໄຫວຕິດຕາມກວດກາຢູ່ເມືອງຍອດອູແຂວງຜົ້ງສາລີ ແລະ ເມືອງປາກແບ່ງ ແຂວງອຸດົມໄຊ ເພື່ອຮັບຟັງການລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງເມືອງໂດຍສັງເຂບ ແລະ ໂອ້ລົມຕໍ່ອຳນາດການປົກຄອງຂອງສອງເມືອງອີກດ້ວຍ.

(ສອນສັກ ວັນວິໄຊ)

## ກຳມາທິການ...

(ຕໍ່ຈາກໜ້າ 1)

ເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ; ມີຄະນະນຳຈາກກະຊວງທີ່ກ່ຽວຂ້ອງ, ຕາງໜ້າບັນດາກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການການຕ່າງປະເທດ ຈາກບັນດາເຂດເລືອກຕັ້ງໃນທົ່ວປະເທດ ພ້ອມດ້ວຍແຂກຖືກເຊີນ ລວມທັງໝົດ 101 ທ່ານ ຍິງ 26 ທ່ານ, ພິເສດກອງປະຊຸມຄັ້ງນີ້ ໄດ້ເຊື້ອເຊີນເອົາບັນດາທ່ານເອກອັກຄະລັດຖະທູດ, ກົງສຸນໃຫຍ່ ແລະ ຜູ້ຕາງໜ້າສຳນັກງານ ສປປ ລາວ ປະຈຳຢູ່ຕ່າງປະເທດ ຈຳນວນ 36 ທ່ານ ເຂົ້າຮ່ວມໂດຍຜ່ານລະບົບອອນລາຍ.

ກອງປະຊຸມ, ໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງກຳມາທິການການຕ່າງປະເທດ ແລະ ແຜນການເບື້ອງຕົ້ນໃນການກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ ຂອງ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໃນປີ 2023, ຮັບຟັງການລາຍງານກ່ຽວກັບການເຄື່ອນໄຫວວຽກງານຕ່າງປະເທດຂອງລັດຖະບານ ປະຈຳປີ 2022, ການຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ຂໍ້ຕົກລົງຕ່າງໆ ທີ່ລັດຖະບານລາວໄດ້ເຊັນກັບຕ່າງປະເທດ, ບັນຫາພົ້ນເດັ່ນຂອງວຽກງານຊາຍແດນ, ວຽກງານກົງສຸນ, ວຽກງານສິດທິມະນຸດ ແລະ ທິດທາງແຜນການປະຈຳປີ 2023; ບົດລາຍງານກ່ຽວກັບການຮ່ວມມື ລາວ-ຫວຽດນາມ ແລະ ລາວ-ຈີນ ປະຈຳປີ 2022 ແລະ ແຜນການຮ່ວມມື ປະຈຳປີ 2023 ແລະ ບົດລາຍງານການປະຕິບັດໂຄງການທ່າບົກ-ທ່ານາແລ້ງ ເຊິ່ງເປັນໂຄງການໜຶ່ງໃນການປະຕິບັດນະໂຍບາຍເຊື່ອມໂຍງ-ເຊື່ອມຈອດຂອງລັດຖະບານ ພ້ອມທັງໄດ້ມີຂໍ້ສະເໜີຈຳນວນໜຶ່ງ ເພື່ອຍົກສູງຄຸນນະພາບການເຄື່ອນໄຫວຕ່າງປະເທດ ໃນສະພາບການພາກພື້ນ-ສາກົນພວມມີການຜັນແປຢ່າງສັບສົນ ຄືປັດຈຸບັນ.

ກອງປະຊຸມຄັ້ງນີ້, ບັນດາຜູ້ແທນໄດ້ຮັບຟັງຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດຂອງການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດ, ຍົກໃຫ້ເຫັນບາງຂໍ້ຄົງຄ້າງທີ່ຄວນເອົາໃຈໃສ່ໃນການປັບປຸງ ແລະ ແກ້ໄຂໃນຕໍ່ໜ້າ, ໄດ້ເນັ້ນໜັກໃຫ້ກຳມາທິການການຕ່າງປະເທດ ເພີ່ມທະວີການປະຕິບັດພາລະບົດບາດ ຂອງອົງການນິຕິບັນຍັດ, ຍົກສູງຄວາມຮັບຜິດຊອບທາງດ້ານໜ້າທີ່ການເມືອງ ໃຫ້ແກ່ຄະນະນຳ, ກຳມະການກຳມາທິການການຕ່າງປະເທດ ແລະ ຍົກສູງຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ແລະ ພາສາຕ່າງປະເທດໃຫ້ພະນັກງານ-ວິຊາການ ທີ່ເປັນເສນາທິການຂອງກຳມາທິການການຕ່າງປະເທດໃຫ້ມີປະສິດທິພາບສູງກວ່າເກົ່າ, ສອດຄ່ອງກັບແນວທາງການຕ່າງປະເທດຂອງພັກ ແລະ ລະບຽບກົດໝາຍຂອງລັດ ແລະ ປະກອບສ່ວນເຂົ້າໃນການຍົກສູງບົດບາດຂອງພັກ, ລັດເຮົາໃນເວທີພາກພື້ນ ແລະ ສາກົນ.

ໃນຕອນທ້າຍ, ກອງປະຊຸມໄດ້ພິຈາລະນາຮັບຮອງເອົາມະຕິຂອງກອງປະຊຸມຄົບຄະນະກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023; ກອງປະຊຸມໄດ້ມອບໃຫ້ກຳມາທິການການຕ່າງປະເທດ ຮ່ວມກັບກະຊວງທີ່ກ່ຽວຂ້ອງ ນຳເອົາຜົນຂອງກອງປະຊຸມຄັ້ງນີ້ໄປຈັດຕັ້ງຜັນຂະຫຍາຍ ຕາມແຜນການເຄື່ອນໄຫວວຽກງານປະຈຳປີ 2023 ຂອງຕົນຢ່າງເປັນເຈົ້າການ ໂດຍສະເພາະການປະຕິບັດພາລະບົດບາດທາງດ້ານນິຕິບັນຍັດ, ການຊຸກຍູ້ຕິດຕາມກວດກາການເຄື່ອນໄຫວວຽກງານ ໃນຂົງເຂດການຕ່າງປະເທດ, ເປັນເຈົ້າການໃນການຄົ້ນຄວ້າ, ເຂົ້າຮ່ວມກອງປະຊຸມ ພາຍໃນ-ສາກົນ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ; ສືບຕໍ່ປັບປຸງກົນໄກປະສານງານ ລະຫວ່າງ ສະພາແຫ່ງຊາດ, ກະຊວງການຕ່າງປະເທດ, ຄະນະພົວພັນຕ່າງປະເທດສູນກາງພັກ ເພື່ອຍົກສູງຄຸນນະພາບໃນການເຄື່ອນໄຫວຕ່າງປະເທດຂອງ ສປປລາວ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ວັນເຕັມ ພາຍໃຕ້ການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ໂດຍການເຂົ້າຮ່ວມຂອງທ່ານ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳກຳມາທິການຍຸຕິທຳ, ມີບັນດາປະທານ-ຮອງປະທານກຳມາທິການຕ່າງໆ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ທີ່ສັງກັດກຳມາທິການຍຸຕິທຳຈາກ 18 ເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍແຂກຖືກເຊີນຈຳນວນໜຶ່ງ.

ທັງນີ້, ເພື່ອສະຫຼຸບຕີລາຄາຄືນການເຄື່ອນໄຫວວຽກງານຂອງກຳມາທິການຍຸຕິທຳ ປະຈຳປີ 2023 ແລະ ວາງທິດທາງແຜນການ ປະຈຳປີ 2023 ໂດຍສະເພາະແມ່ນວຽກງານຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ວຽກງານພິຈາລະນາຄຳຮ້ອງຂໍຄວາມເປັນທຳ ພ້ອມທັງຄົ້ນຄວ້າປະກອບຄຳເຫັນຕໍ່ນິຕິກຳທີ່ພົວພັນກັບວຽກງານຂອງກຳມາທິການຍຸຕິທຳ.

ໃນກອງປະຊຸມ, ໄດ້ຮັບຟັງການຜ່ານບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງປະຈຳປີ 2023 ຂອງກຳມາທິການຍຸຕິທຳ; ເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ ປີ 2022); ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ. ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ຜັນປ່ຽນກັນປະກອບຄຳຄິດຄຳເຫັນຕໍ່ບົດດັ່ງກ່າວຢ່າງກົງໄປກົງມາ.

ໂອກາດດັ່ງກ່າວ, ທ່ານ ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງມີເນື້ອໃນສຳຄັນວ່າ: ໃນໜຶ່ງປີຜ່ານມາ ກຳມາທິການຍຸຕິທຳໄດ້ມີຄວາມບາກບັ່ນບຸກບືນປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເຊິ່ງສາມາດຍາດໄດ້ຜົນງານ ແລະ ຜົນສຳເລັດຫຼາຍປະການ ເປັນຕົ້ນ: ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ສຳເລັດການສ້າງ ແລະ ປັບປຸງ ນິຕິກຳຈຳນວນໜຶ່ງທີ່ພົວພັນກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາແຫ່ງຊາດ; ສຳເລັດການປັບປຸງກົງຈັກການຈັດຕັ້ງ, ປັບປຸງກົນໄກແບບແຜນວິທີເຮັດວຽກ ແລະ ຈັດວາງພະນັກງານເຂົ້າໃສ່ແຕ່ລະຕຳແໜ່ງງານ; ເປັນເຈົ້າການຄົ້ນຄວ້າໜັງສືສະເໜີຂອງສານປະຊາຊົນສູງສຸດກ່ຽວກັບກັນແຕ່ງຕັ້ງ, ຍົກຍ້າຍ ແລະ ຮັບອຸດໜູນບຳນານ ຂອງຜູ້ພິພາກສາ ໃຫ້ມີຄວາມວ່ອງໄວຂຶ້ນ. ແຕ່ຄຽງຄູ່ກັນນັ້ນ ສະເໜີໃຫ້ກຳມາທິການ ກໍຄືຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ເອົາໃຈໃສ່ນຳພາ-ຊີ້ນຳ ການຈັດຕັ້ງຜັນຂະຫຍາຍແຜນວຽກປີ 2023 ຂອງສະພາແຫ່ງຊາດ ໃຫ້ເປັນແຜນງານການໂຄງການອັນລະອຽດປະຈຳ 6 ເດືອນ ແລະ ປະຈຳເດືອນຂອງກຳມາທິການ ແນໃສ່ເຮັດໃຫ້ບັນດາແຜນວຽກທີ່ໄດ້ກຳນົດໄວ້ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດ; ເອົາໃຈໃສ່ວຽກງານປະສານສົມທົບກັບບັນດາກຳມະການສັງກັດກຳມາທິການຍຸຕິທຳ ປະຈຳຢູ່ແຕ່ລະເຂດເລືອກຕັ້ງ ໃຫ້ແໜ້ນແຟ້ນກວ່າເກົ່າ ເພື່ອເຮັດໃຫ້ວຽກງານຂອງກຳມາທິການໄດ້ຮັບການຈັດຕັ້ງຜັນຂະຫຍາຍລົງສູ່ທ້ອງຖິ່ນຮາກຖານ, ພ້ອມທັງຮັບປະກັນການເກັບກຳສະພາບ ກໍຄືການສະໜອງຂໍ້ມູນ-ຂ່າວສານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ທັນເວລາ ແລະ ມີຄຸນນະພາບດີຂຶ້ນເປັນກ້າວໆ; ສູ້ຊົນຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ໃຫ້ໄວຂຶ້ນ ແລະ ຖືກຕ້ອງຕາມການກຳນົດຂອງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ, ສູ້ຊົນຄົ້ນຄວ້າຄຳຮ້ອງທຸກ ໃຫ້ບັນລຸ 85% ຂອງຄຳຮ້ອງຂໍຄວາມເປັນທຳ ທີ່ເຂົ້າມາໃນປີ 2023 ແລະ ຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງ ແກ້ໄຂຄຳຮ້ອງ ໃຫ້ມີຄວາມໂປ່ງໃສ, ທັນກຳນົດເວລາ ແລະ ຍຸຕິທຳ ຕາມກົດໝາຍ ເພື່ອຫຼີກລ່ຽງທາງສຽງຈົ່ມວ່າ ຂອງປະຊາຊົນ ໃຫ້ນັບມື້ຫຼຸດລົງ; ສະເໜີໃຫ້ກຳມາທິການ ແລະ ກຳມະການສັງກັດກຳມາທິການປະຈຳຢູ່ແຕ່ລະເຂດເລືອກຕັ້ງ ສືບຕໍ່ເປັນເຈົ້າການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດ 4 ກົດໝາຍ ໃນຂົງເຂດຍຸຕິທຳ (ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ) ແລະ ການປະເມີນກົດໝາຍ ຢູ່ໃນຂົງເຂດ ປກຊ-ປກສ ຢູ່ແຕ່ລະເຂດເລືອກຕັ້ງ ເພື່ອຊອກໃຫ້ເຫັນຈຸດອ່ອນ, ຊ່ອງຫວ່າງຂອງກົດໝາຍ ແລະ ດ້ານດີ, ດ້ານອ່ອນ ໃນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ພ້ອມທັງຄົ້ນຄວ້າມາດຕະການ ແລະ ວິທີການແກ້ໄຂ ເພື່ອເປັນທິດທາງໃນການປັບປຸງບັນດາກົດໝາຍໃນຕໍ່ໜ້າ ໃຫ້ມີເນື້ອໃນສອດຄ່ອງ, ຄົບຖ້ວນ ແລະ ຮັດກຸມ ເປັນບ່ອນອີງໃຫ້ແກ່ການປະຕິບັດວຽກງານຂອງອົງການກ່ຽວຂ້ອງມີຄຸນນະພາບ.

(ກົງທະນູຄຳ ພິພັດເສລີ)

# ສສຊ ຖະແຫຼງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ



(ສພຊ) ພາຍຫຼັງສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ນຳເອົາຜົນສຳເລັດກອງປະຊຸມດັ່ງກ່າວ ຖະແຫຼງຂ່າວໃຫ້ສື່ມວນຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າໃນທົ່ວແຂວງຂອງຕົນຮັບຊາບ ກ່ຽວກັບຜົນສຳເລັດກອງປະຊຸມດັ່ງກ່າວ ເຊັ່ນ ທ່ານ ບຸນສອນ ເພັດລາວັນ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໄດ້ຖະແຫຼງເມື່ອວັນທີ 4 ມັງກອນ 2023; ທ່ານ ວຽງໄຊ ສີວິໄລຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ແລະ ທ່ານ ຈັນທະຄາດ ສີສຸພັນ ຮອງເລຂາທິການ ສພຂ ສາລະວັນ ໄດ້ຖະແຫຼງເມື່ອວັນທີ 5 ມັງກອນ 2023.

ເຊິ່ງເນື້ອໃນບາງຕອນໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນວັນທີ 5 ທັນວາ 2022 ແລະ ໄດ້ດຳເນີນມາເຖິງຕອນບ່າຍຂອງວັນສຸກ ວັນທີ 30 ທັນວາ 2022 ເຊິ່ງໃຊ້ເວລາດຳເນີນກອງປະຊຸມທັງໝົດ 20 ວັນ ທີ່ຫ້ອງປະຊຸມຂອງ ສພຊ ນະຄອນຫລວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງປະທານ ສພຊ, ປະທານຄະນະປະຈຳ ສພຊ ໂດຍການເຂົ້າຮ່ວມຂອງເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ ແລະ ນາຍົກລັດຖະມົນຕີ ແຫ່ງ ສປປລາວ; ບັນດາທ່ານການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ (ສສຊ), ອະດີດການນຳຂອງ ສພຊ, ຕາງໜ້າຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ແລະ ແຂກຖືກເຊີນ ເຂົ້າຮ່ວມ ເຂົ້າຮ່ວມທັງໝົດ 164 ທ່ານ ຍິງ 36 ທ່ານ.



ຕະຫຼອດໄລຍະ 20 ວັນໃນການດຳເນີນກອງປະຊຸມ, ບັນດາທ່ານ ສສຊ ໄດ້ຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາ ຕໍ່ເນື້ອໃນທີ່ນຳມາພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມ ທີ່ເຕັມໄປດ້ວຍບັນຍາກາດສ້າງສັນ ແລະ ມີຄວາມເປັນເອກະພາບສູງ ກ່ອນລົງຄະແນນສຽງຮັບເອົາເອກະສານສຳຄັນຕ່າງໆ ເຮັດໃຫ້ກອງປະຊຸມໄດ້ສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ສພຊ ລວມມີ 21 ສະບັບຄື: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ມະຕິວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປລາວ ຜູ້ໃໝ່; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ; ຜົນການກວດກາຕາມຜົນການກວດສອບ ປີ 2020; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025; ມະຕິວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 12 ສະບັບ (ຈຳນວນ 12 ມະຕິ).

ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ, ຮ່າງກົດໝາຍວ່າດ້ວຍການທາງນ້ຳ ແລະ ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ; ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ; ກົດໝາຍວ່າດ້ວຍການກວດກາລັດ.

ບັນທ່ານຍັງໄດ້ໃຫ້ຮູ້ຕື່ມອີກວ່າ: ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ4 ຂອງສພຊ ຊຸດທີ IX ນີ້ ສພຊ ໄດ້ສະເໜີໃຫ້ 19 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງ ສພຊ ແລະ ສສຊ ໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີ ທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປລາວ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງກະສິກຳ-ປ່າໄມ້, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະກິລາ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງການຕ່າງປະເທດ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນປະເທດ ແລະ ກະຊວງເຕັກໂນໂລຊີ ແລະການສື່ສານ.



ໃນໄລຍະດຳເນີນກອງສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ຫຼາຍກວ່າ 610 ສາຍ 331 ເລື່ອງ ເຊິ່ງພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນ ດັ່ງກ່າວ ກອງເລຂາກອງປະຊຸມ ຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອປະສານສົມທົບກັບທຸກພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

(ນາງ ບູລາຕີ ແສນທະວົງ, ນາງ ສຸກສະຫວັນ ອິນທະແສງ ແລະ ດີລຳພົນ ພົມມະຈັນ)

## ຫາລືວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ

(ສພຊ) ຕອນບ່າຍຂອງວັນທີ 5 ມັງກອນ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ເປີດກອງປະຊຸມປຶກສາຫາລື ເພື່ອຄວາມເປັນເອກະພາບຕໍ່ເນື້ອໃນບົດລາຍງານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ວຽກງານກໍ່ສ້າງຮາກຖານຕິດພັນກັບວຽກງານສາມສ້າງ ທີ່ຈະນຳເຂົ້າຄົ້ນຄວ້າ, ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໂດຍການເປັນປະທານຂອງ ທ່ານ ນາງ ຂັນທອງ ພັນທະຈັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີພະແນກການທີ່ກ່ຽວຂ້ອງ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສາມສ້າງ ປີ 2020-2022 ແລະ ທິດທາງແຜນການປີ 2023-2025 ຈາກພະແນກການທີ່ກ່ຽວຂ້ອງ ເພື່ອກະກຽມເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ທີ່ຈະໄຂຂຶ້ນໃນໄວໆນີ້. ພ້ອມນີ້, ຜູ້ແທນກອງປະຊຸມຍັງໄດ້ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳຄິດເຫັນຢ່າງກົງໄປກົງມາ ແລະ ປະທານກອງປະຊຸມກໍໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ເພື່ອເຮັດໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບ, ເອກະສານມີເນື້ອໃນທີ່ຄົບຖ້ວນ, ຮອບດ້ານ, ລະອຽດ, ຈະແຈ້ງ ແລະ ຖືກຕ້ອງ.



(ມາລາວັນ ບົວແກ້ວ)

# ສະມາຊິກພັກ ຕ້ອງຝຶກຝົນຫຼໍ່ຫຼອມ ໃຫ້ກາຍເປັນສະມາຊິກພັກຜູ້ທີ່ດີເດັ່ນ



(ສພຊ) ສະຫາຍ ສິມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ ທັງເປັນຮອງປະທານສະພາປະຊາຊົນແຂວງຫົວພັນ ໄດ້ມີຄຳເຫັນກ່າວຮັບສະມາຊິກພັກສົມບູນໃໝ່ ແລະ ໂອ້ລົມຕໍ່ພິທີເມື່ອວັນທີ 6 ມັງກອນຜ່ານມາ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໃນພິທີເລື່ອນສະມາຊິກພັກສຳຮອງຂຶ້ນເປັນສະມາຊິກພັກສົມບູນ ເຊິ່ງມີບັນດາສະຫາຍສະມາຊິກພັກສົມບູນ-ສຳຮອງພາຍໃນໜ່ວຍເຂົ້າຮ່ວມ.

ສະຫາຍ ສິມສັກ ດອນຈານິດ ໄດ້ຕີລາສູງຕໍ່ຄວາມບຸກບືນສູ້ຊົນຂອງ 3 ສະຫາຍ ສະມາຊິກພັກສົມບູນໃໝ່ ທີ່ຮັກສາໄດ້ຄຸນທາດການເມືອງຢ່າງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດ, ມີຄວາມອຸ່ນອ່ຽນທຸ່ນທ່ຽງເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳຂອງພັກ, ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ ພາຍໃນແໜ້ນແຟ້ນ ແລະ ພາຍນອກກວ້າງຂວາງ, ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງຕົນເອງ ແລະ ປະກອບສ່ວນເຂົ້າໃນວຽກງານຂອງອົງການຈັດຕັ້ງມະຫາຊົນ, ບຸກບືນສູ້ຊົນ ແລະ ເຮັດຫຼ້ອນໜ້າທີ່ ຕາມຄວາມຮັບຜິດຊອບຂອງຕົນໄດ້ເປັນຢ່າງດີ. ພ້ອມນັ້ນ, ສະຫາຍເລຂາໜ່ວຍພັກ ຍັງໄດ້ເນັ້ນໜັກໃຫ້ສະມາຊິກພັກສົມບູນ ຜູ້ໃໝ່ ເປັນຕົ້ນແມ່ນສືບຕໍ່ຍົກສູງຄຸນທາດການເມືອງໃຫ້ໜັກແໜ້ນ, ຝຶກຝົນຫຼໍ່ຫຼອມຕົນເອງດ້ານຄຸນສົມບັດສິນທຳປະຕິບັດ, ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ, ກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ, ຈັດຕັ້ງປະຕິບັດກົດລະບຽບຂອງພັກຢ່າງເຂັ້ມງວດ ໂດຍສະເພາະສິດ, ໜ້າທີ່, ຂໍ້ຫ້າມຂອງສະມາຊິກພັກ; ໃຫ້ມີຄວາມເປັນເອກະພາບ ແລະ ເປັນເຈົ້າການໃນການປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ ກົດລະບຽບພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ, ປະກອບສ່ວນເຂົ້າໃນການກໍ່ສ້າງ, ບູລະນະແນວທາງ, ແຜນນະໂຍບາຍຂອງພັກ-ລັດ, ຕັ້ງໜ້າຮ່ຳຮຽນທິດສະດີມາກ-ເລນິນ, ແນວຄິດປະທານໄກສອນ ພົມວິຫານ, ຍົກລະດັບການສຶກສາ, ວິຊາສະເພາະ, ເຕັກນິກ-ວິທະຍາສາດ ແລະ ພາສາຕ່າງປະເທດ ແນໃສ່ເຮັດສຳເລັດໜ້າທີ່ ຕາມການຈັດຕັ້ງພັກ-ລັດມອບໝາຍ, ຕ້ານແນວຄິດອາດຍາສິດ, ສໍ້ລາດບັງຫຼວງ, ແນວຄິດເອກະຊົນ, ຫຼິ້ນກິນຟູມເຟືອຍ ແລະ ສິ່ງຫຍໍ້ທໍ້ອື່ນໆ; ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍໃຫ້ມີໝາກຜົນໃໝ່ຍິ່ງໃຫຍ່ກວ່າເກົ່າ, ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນສະມາຊິກພັກຜູ້ທີ່ດີເດັ່ນໃນຕໍ່ໜ້າ.

(ບຸນແຜງ ຜຸຍພັກດີ)

# ສພຂ ເຊກອງ ຕີລາຄາຄືນ ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022

(ສພຊ) ຕອນບ່າຍວັນທີ 12 ມັງກອນ 2023 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມເພື່ອສະຫລຸບຕີລາຄາຄືນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ຄລສ) ເຊກອງ ແລະ ແລກປ່ຽນຖອດຖອນບົດຮຽນລະຫວ່າງ ຄລສ ກັບບັນດາກົງຈັກພາຍໃນສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ປອ. ແພງສີ ສີລາວົ ຮອງປະທານສະພາປະຊາຊົນແຂວງ, ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງ; ມີບັນດາທ່ານຄະນະສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ນາງ ບົວທອງ ຄຸ້ມມະວົງ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ເຊິ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີ, ດ້ານອ່ອນ, ສາເຫດ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ເຮັດໃຫ້ວຽກງານໃນຕໍ່ໜ້າໃຫ້ມີຄວາມໜັກແໜ້ນເຂັ້ມແຂງຍິ່ງໆຂຶ້ນ. ຈາກນັ້ນ, ກໍໄດ້ຮັບຟັງບັນດາເນື້ອໃນເອກະສານທີ່ສຳຄັນຕ່າງໆຕື່ມອີກ ເປັນຕົ້ນ: ດຳລັດຂອງລັດຖະບານ ສະບັບເລກທີ 205/ລບ, ລົງວັນທີ 22/7/2021; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 42/ຄປຈ, ລົງວັນທີ 14/2/2022 ແລະ ແຈ້ງການຂອງຄະນະເລຂາທິ

ອ່ານຕໍ່ໜ້າ 7

# ກອງປະຊຸມວຽກງານ ປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງຫຼວງນ້ຳທາ



(ສພຊ) ຕອນເຊົ້າຂອງວັນທີ 10 ມັງກອນ 2022 ຄະນະເລຂາທິການສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມວຽກງານ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ຂອງຕົນ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານຊ່ວຍວຽກສະມາຊິກສະພາປະຊາຊົນແຂວງບັນດາເມືອງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມທັງໝົດ 34 ທ່ານ ຍິງ 12 ທ່ານ.

ໃນກອງປະຊຸມ, ທ່ານ ຂັດ ໝັ້ນທະໄລ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຫຼວງນ້ຳທາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນ ພາຍໃນຄະນະເລຂາທິການຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ ເຮັດໃຫ້ພະນັກງານ-ລັດຖະກອນ ມີແນວຄິດອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກໃນໄລຍະໃໝ່, ເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງລັດ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ວິຊາສະເພາະຂອງຕົນເອົາໃຈໃສ່ຄົ້ນຄວ້າສຶກສາຮ່ຳຮຽນ, ຮັດແໜ້ນຄວາມສາມັກຄີພາຍໃນ ແລະ ພາຍນອກດີ, ຄະນະເລຂາທິການສະພາປະຊາຊົນແຂວງຫລວງນ້ຳທາ ມີ 3 ຂະແໜງການຂຶ້ນກັບຄື ຂະແໜງຄົ້ນຄວ້າ-ສັງລວມ, ຂະແໜງຈັດຕັ້ງພະນັກງານ ແລະ ກວດກາ ແລະ ຂະແໜງບໍລິຫານ, ແຜນການ ແລະ ການເງິນ, ສຳເລັດສະຫຼຸບການເຄື່ອນໄຫວວຽກງານປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 9 ເດືອນ ຂອງສະພາປະຊາຊົນແຂວງ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ; ສຳເລັດການກະກຽມເນື້ອໃນ, ເອກະສານ, ບົດບັນທຶກກອງປະຊຸມ, ບົດລາຍງານຜົນສຳເລັດກອງປະຊຸມ ແລະ ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 2 ແລະ ສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ກອງປະຊຸມອື່ນໆຂອງສະພາປະຊາຊົນແຂວງ ລວມທັງໝົດ 25 ກອງປະຊຸມ; ໄດ້ຕິດຕາມຄະນະ ສສຊ, ສສຂ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຊຸດທີ II 5 ເມືອງພາຍໃນແຂວງ ເຊິ່ງເຄື່ອນໄຫວໄດ້ທັງໝົດ 19 ຈຸດ, ມີ 27 ບ້ານ, ຜູ້ເຂົ້າຮ່ວມຮັບຟັງທັງໝົດ 2.384 ທ່ານ ຍິງ 653 ທ່ານ ແລະ ໄດ້ມອບເຄື່ອງຊ່ວຍເຫຼືອຄິດເປັນເງິນຈຳນວນ 10 ລ້ານກີບ; ສຳເລັດການປັບປຸງມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະເລຂາທິການສະພາປະຊາຊົນແຂວງ.

ພ້ອມນັ້ນ, ໄດ້ຮັບຟັງບົດປະກອບຄຳເຫັນ ແລະ ລາຍງານວຽກງານທີ່ພົ້ນເດັ່ນຂອງຂະແໜງຄົ້ນຄວ້າ-ສັງລວມ, ຂະແໜງຈັດຕັ້ງພະນັກງານ ແລະ ກວດກາ ແລະ ຂະແໜງບໍລິຫານ, ແຜນການ ແລະ ການເງິນ. ຫຼັງຈາກນັ້ນບັນດາຜູ້ແທນກອງປະຊຸມ ກໍໄດ້ພ້ອມກັນປະກອບຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຫຼວງນ້ຳທາ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຢ່າງເປັນຂະບວນ ເພື່ອເຮັດໃຫ້ບົດສະຫຼຸບດັ່ງກ່າວມີເນື້ອໃນຄົບຖ້ວນ, ສົມບູນຂຶ້ນກວ່າເກົ່າ.

ຕອນທ້າຍກອງປະຊຸມ, ທ່ານ ກົງເພັດ ແກ້ວບົວພາ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນໄລຍະ 1 ປີທີ່ຜ່ານມາ ພ້ອມທັງເນັ້ນໜັກໃຫ້ພ້ອມກັນສືບຕໍ່ເອົາໃຈໃສ່ປະຕິບັດໜ້າທີ່ວິຊາສະເພາະຂອງຕົນດ້ວຍຄວາມຮັບຜິດຊອບສູງ, ຕັ້ງໜ້າຄົ້ນຄວ້າສຶກສາຮ່ຳຮຽນ ແລະ ປະຕິບັດໜ້າທີ່ໃນການເປັນເສນາທິການໃຫ້ໄດ້ຮັບຜົນດີ, ຮັບປະກັນການເປັນເສນາທິການທີ່ດີ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ.

(ນາງ ອຳພອນ ສີປະເສີດ)



# ທວນຄືນມູນເຊື້ອວັນສ້າງຕັ້ງ ອົງການໄອຍະການປະຊາຊົນ ຄົບຮອບ 33 ປີ




(ສພຊ) ວັນທີ 6 ມັງກອນ 2023 ທີ່ສະໂມສອນແຂວງສາລະວັນ ໄດ້ຈັດພິທີປາຖະກະຖາເລົ່າຄືນມູນເຊື້ອທີ່ມີຄວາມໝາຍຄວາມສຳຄັນຂອງປະເທດຊາດ ຄື ວັນສ້າງຕັ້ງອົງການໄອຍະການປະຊາຊົນ ແຫ່ງ ສປປລາວ ຄົບຮອບ 33 ປີ (9/1/1990-9/1/2023) ໂດຍການປາຖະກາເລົ່າຄືນມູນເຊື້ອຄັ້ງນີ້ ໂດຍທ່ານ ສີເຣັ່ງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ, ປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ; ເຂົ້າຮ່ວມຮັບຟັງມີທ່ານຄະນະປະຈຳພັກແຂວງ, ຫົວໜ້າ-ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ບັນດາທ່ານຕາງໜ້າຈາກພະແນກການອ້ອມຂ້າງແຂວງ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍພະນັກງານພາຍໃນອົງການໄອຍະການປະຊາຊົນແຂວງ.

ໂອກາດດັ່ງກ່າວ, ທ່ານ ສີເຣັ່ງ ຫອມສົມບັດ ໄດ້ຍົກໃຫ້ເຫັນປະຫວັດແຫ່ງການກຳເນີດ, ການເຕີບໃຫຍ່ຂະຫຍາຍຕົວຂອງອົງການໄອຍະການປະຊາຊົນ ກ່ອນ ແລະ ຫຼັງ ປີ 1975, ມູນເຊື້ອ ແລະ ທິດທາງກ້າວເດີນຂອງອົງການໄອຍະການປະຊາຊົນ ຕາມທິດກ້າວໜ້າ, ທັນສະໄໝ ແລະ ວິທະຍາສາດ ພາຍໃຕ້ການນຳພາຂອງພັກ.

ໄລຍະນັບຕັ້ງແຕ່ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1990 ຕາມກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ເຊິ່ງມາຮອດປີນີ້ ມີອາຍຸຄົບຮອບ 33 ປີພໍດີ (9/1/1990-9/1/2023) ອົງການໄອຍະການປະຊາຊົນ ກໍໄດ້ຕັ້ງໜ້າເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ ແລະ ເຕີບໃຫຍ່ເຂັ້ມແຂງໃນທຸກດ້ານ. ອົງການໄອຍະການປະຊາຊົນ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ສັບສົນ ແລະ ໄດ້ປະເຊີນໜ້າກັບສິ່ງທົດສອບ ແລະ ທ້າທາຍຫຼາຍປະການ ພາຍໃຕ້ການນຳພາຂອງສູນກາງພັກ, ໂດຍຍຶດໝັ້ນລັດຖະທຳມະນູນ ແຫ່ງ ສປປລາວ ແລະ ຄວາມບຸກບືນຜ່ານຜ່າຂອງພະນັກງານ-ສະມາຊິກພັກທຸກທົ່ວໜ້າ, ອົງການໄອຍະການປະຊາຊົນ ແຕ່ສູນກາງລົງຮອດທ້ອງຖິ່ນ ໄດ້ຮັບການພັດທະນາຢ່າງຮອບດ້ານ ແລະ ເຮັດລ້ອນໜ້າທີ່ການເມືອງທີ່ພັກ-ລັດ ມອບໝາຍໃຫ້ເປັນຢ່າງດີ.

(ດີລຳພົນ ພົມມະຈັນ)



## ສພຂ...

(ຕໍ່ຈາກໜ້າ 6)

ການສະພາແຫ່ງຊາດ ສະບັບເລກທີ 45/ຄລສ, ລົງວັນທີ 9/1/2023. ພ້ອມນັ້ນ, ບັນດາຜູ້ແທນກອງປະຊຸມ ກໍໄດ້ມີການສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບຂອງຄະນະເລຂາທິການຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນດັ່ງກ່າວມີຄວາມຄົບຖ້ວນສົມບູນຂຶ້ນຕື່ມ.

ໂອກາດດັ່ງກ່າວ, ທ່ານ ປອ. ແພງສີ ສີລາວີ ໄດ້ໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຄະນະເລຂາທິການສະພາປະຊາຊົນແຂວງ ກໍຄືບັນດາເສນາທິການທີ່ ໄດ້ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຢ່າງຕັ້ງໜ້າ ແລະ ມີຜົນສຳເລັດຫຼາຍດ້ານ ສະນັ້ນ, ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມໜັກແໜ້ນເຂັ້ມແຂງຂຶ້ນຕື່ມ ໃຫ້ເອົາໃຈໃສ່ໃນການເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານພາຍໃນສະພາປະຊາຊົນແຂວງ ໂດຍຕິດພັນກັບການກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແຕ່ລະຄະນະກຳມະການ, ຂະແໜງການການປະຕິບັດແບບແຜນວິທີເຮັດວຽກ ພ້ອມທັງຍົກສູງທາງດ້ານກົນໄກການປະສານງານລະຫວ່າງຄະນະເລຂາທິການ ກັບຄະນະກຳມະການ ພາຍໃນສະພາປະຊາຊົນແຂວງ, ບັນດາຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 4 ຕົວເມືອງ ແລະ ອົງການທີ່ກ່ຽວຂ້ອງ ໃຫ້ມີຄວາມກົມກຽວ ແລະ ທ່ວງທັນກັບສະພາບການເຄື່ອນໄຫວວຽກງານຕົວຈິງ.

(ນາລີວັນ)

# ຄລຂ ສະຫວັນນະເຂດ ຖະແຫຼງຂ່າວ ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4

(ສພຊ) ໃນຕອນບ່າຍວັນທີ 12 ມັງກອນ 2023 ທີ່ຫ້ອງການສະພາປະຊາຊົນແຂວງສະຫວັນນະເຂດ, ຄະນະເລຂາທິການຂອງສະພາປະຊາຊົນແຂວງ ໄດ້ຈັດໃຫ້ມີການຖະແຫຼງຂ່າວກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໂດຍການຖະແຫຼງຂອງທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ ໄດ້ຖະແຫຼງວ່າ: ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຈະໄດ້ໄຂຂຶ້ນເປັນເວລາ 4 ວັນ ເລີ່ມແຕ່ຕອນເຊົ້າວັນຄານວັນທີ 24-27 ມັງກອນ 2023 ທີ່ຫໍວັດທະນະທຳໄກສອນພົມວິຫານ ແຂວງສະຫວັນນະເຂດ.

ໃນວາລະປະຊຸມຈະໄດ້ປຶກສາຫາລືວຽກງານສຳຄັນຕ່າງໆຄື: ວຽກອົງການປົກຄອງແຂວງ ເຊິ່ງຈະພິຈາລະນາ, ຮັບຮອງເອົາບົດລາຍງານທ່ານເຈົ້າແຂວງໆ ສະຫວັນນະເຂດ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງການລາຍງານຈາກທ່ານຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງການລາຍງານ ຈາກຮັກສາການຫົວໜ້າພະແນກການເງິນແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022, ທິດທາງແຜນການ ປະຈຳປີ 2023 ແລະ ການຄຸ້ມຄອງຊັບສິນລັດພາຍໃນແຂວງ.



ວຽກອົງການກວດສອບ ປະຈຳພາກກາງ ແລະ ອົງການກວດກາລັດແຂວງ ເຊິ່ງຈະໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການກວດສອບ ປະຈຳພາກກາງ ກ່ຽວກັບຜົນຂອງການກວດກາຄືນ ແລະ ການສະຫຼຸບງົບປະມານຂາດຕົວ ປະຈຳປີ 2021,ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ພິຈາລະນາ, ຮັບຮອງເອົາບົດລາຍງານ ຂອງອົງການກວດກາລັດແຂວງ ກ່ຽວກັບການຕິດຕາມກວດກາແກ້ໄຂຜົນການກວດສອບ ປີ2021, ບົດສະຫຼຸບການເຄື່ອນໄຫວວຽກງານກວດກາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023.

ວຽກສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເຊິ່ງຈະໄດ້ພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງອົງການປົກຄອງແຂວງ ຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງຂີ້ເຫຍື້ອໃນທົ່ວແຂວງສະຫວັນນະເຂດ (ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ); ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພ ພາຍໃນແຂວງສະຫວັນນະເຂດ (ກອງບັນຊາການ ປກສ ແຂວງ).

ວຽກອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ເຊິ່ງຈະໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023.

ວຽກສະພາປະຊາຊົນແຂວງ ຈະໄດ້ພິຈາລະນາ, ຮັບຮອງເອົາການລາຍງານຂອງສະພາປະຊາຊົນແຂວງ ຊຸດທີ II ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງການປະກອບຄຳເຫັນ ຈາກອົງການແນວລາວສ້າງຊາດແຂວງ ຕໍ່ກັບການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ ຊຸດທີ II ໃນ 1 ປີ ຜ່ານມາ.

ວຽກບຸກຄະລາກອນ ຈະໄດ້ພິຈາລະນາ, ຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ ຕື່ມອີກ.

# ມອບ-ຮັບຜ້າຫົ່ມກັນໜາວ 50 ຜືນ

(ສພຊ) ຕອນເຊົ້າຂອງວັນທີ 16 ມັງກອນ 2023 ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຮັບຜ້າຫົ່ມກັນໜາວ ຈຳນວນ 50 ຜືນ ມູນຄ່າ 4 ລ້ານກີບ ໂດຍການມອບຂອງທ່ານ ນາງ ຄົງສະຫວັນ ວົງຈອມສີ ເຈົ້າຂອງຮ້ານຂາຍເຄື່ອງໃຊ້ຫ້ອງການ ຢູ່ແຂວງສາລະວັນ ແລະ ກ່າວຮັບໂດຍທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານ ສພຂ ສາລະວັນ, ມີຮອງເລຂາທິການ ສພຂ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຂ ເຂົ້າຮ່ວມເປັນສັກຂີພິຍານ.



ໂອກາດດຽວກັນນີ້, ທ່ານ ນາງ ສູນໄຖ ໄຊຍະແສງ ຕາງໜ້າໃຫ້ແກ່ຄະນະປະຈຳ ສພຂ ສາລະວັນ ໄດ້ມອບໃບຂອບໃຈ ແລະ ກ່າວສະແດງຄວາມຂອບໃຈຢ່າງສູງ ຕໍ່ທ່ານ ນາງ ຄົງສະຫວັນ ວົງຈອມສີ ທີ່ມີນ້ຳໃຈເສຍສະຫຼະວັດຖຸສ່ວນຕົວ ເພື່ອແບ່ງປັນບັນເທົາທຸກໃຫ້ປະຊາຊົນ ທີ່ປະສົບກັບໄພໜາວຄັ້ງນີ້ ແລະ ທ່ານຍັງໄດ້ໃຫ້ຄຳໝັ້ນສັນຍາວ່າ ເຄື່ອງຈຳນວນດັ່ງກ່າວນີ້ ສພຂ ສາລະວັນ ຈະນຳໄປມອບຕໍ່ໃຫ້ພໍ່ແມ່ປະຊາຊົນຜູ້ທຸກຍາກຂາດເຂີນຢູ່ເຂດຫ່າງໄກສອກຫຼີກໃຫ້ສຳເລັດໄວໆນີ້.

(ດີລຳພົນ ພົມມະຈັນ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 19 ການນຳເອົາອາວຸດເສິກ ເຂົ້າ-ອອກ ສປປລາວ**

ການນຳເອົາອາວຸດເສິກ ເຂົ້າ ສປປລາວ ຂອງຕ່າງປະເທດ ເພື່ອປ້ອງກັນການນຳ ທີ່ມາເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງສະແດງ, ຝຶກຊ້ອມ ຫຼື ກິດຈະກຳອື່ນ ຕ້ອງສະເໜີຜ່ານກະຊວງ ການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງປ້ອງກັນປະເທດ ພິຈາລະນາອະນຸຍາດ ບົນພື້ນຖານການປະສານສົມ ທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການກວດກາບັນຊີ ແລະ ອາວຸດເສິກຕົວຈິງ ກ່ອນນຳເຂົ້າ ສປປລາວ.

ພາຍຫຼັງປະຕິບັດໜ້າທີ່ສຳເລັດແລ້ວຕ້ອງໄດ້ກວດກາເອົາອາວຸດເສິກທີ່ນຳເຂົ້າມານັ້ນ ອອກ ສປປລາວ ໃຫ້ຄົບຖ້ວນ ຫຼື ປະຕິບັດຕາມການຕົກລົງຂອງສອງລັດທີ່ກ່ຽວຂ້ອງ.

ການນຳເອົາອາວຸດເສິກ ອອກ ສປປລາວ ຂອງເຈົ້າໜ້າທີ່ ເພື່ອປ້ອງກັນການນຳຂອງປະເທດຕົນ ທີ່ໄປເຄື່ອນໄຫວ, ຢ້ຽມຢາມ, ເຮັດວຽກ, ເຂົ້າຮ່ວມກອງປະຊຸມ, ວາງສະແດງ, ຝຶກຊ້ອມ ຫຼື ກິດຈະກຳອື່ນ ຢູ່ ຕ່າງ ປະເທດ ຕ້ອງສະເໜີຂໍອະນຸຍາດນຳອົງການທີ່ມີສິດອຳນາດຂອງປະເທດທີ່ກ່ຽວຂ້ອງ ໂດຍຜ່ານກະຊວງການຕ່າງປະເທດ ແລະ ປະຕິບັດຕາມກົດໝາຍ ຂອງປະເທດທີ່ກ່ຽວຂ້ອງ ພາຍຫຼັງສຳເລັດຕ້ອງນຳກັບຄືນປະເທດ ໃຫ້ຄົບຖ້ວນຕາມຈຳນວນ.

**ໝວດທີ 3**

**ການຄຸ້ມຄອງອາວຸດກິລາ**

**ມາດຕາ 20 ການຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຊາດ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຊາດ ເປັນຕົ້ນ ປືນ, ລູກກະສູນ ແລະ ອາວຸດກິລາອື່ນ ທີ່ນຳໃຊ້ເຂົ້າໃນການຝຶກຊ້ອມ ແລະ ແຂ່ງຂັນກິລາ ທາງການທະຫານ ແລະ ກິລາທົ່ວໄປ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ນຳເຂົ້າ, ປົກປັກຮັກສາ, ປະກອບ, ອະນຸຍາດນຳໃຊ້ ແລະ ອື່ນໆ ຕາມລະບຽບການ.

**ມາດຕາ 21 ການຄຸ້ມຄອງອາວຸດກິລາ ຂອງກຳລັງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຄຸ້ມຄອງອາວຸດກິລາ ເປັນຕົ້ນ ປືນ, ລູກກະສູນ ແລະ ອາວຸດກິ ລາອື່ນ ທີ່ນຳໃຊ້ເຂົ້າໃນການ ຝຶກຊ້ອມ ແລະ ແຂ່ງຂັນ ກິລາ ຂອງກຳລັງປ້ອງກັນຄວາມສະຫງົບ ແລະ ກິລາທົ່ວໄປ ໃນລະດັບຊາດ, ພາກພື້ນ ແລະ ສາກົນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດ້ວຍການ ນຳເຂົ້າ, ປົກປັກຮັກສາ, ປະກອບ, ອະນຸຍາດນຳໃຊ້ ແລະ ອື່ນໆ ຕາມລະບຽບການ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄຸ້ມຄອງອາວຸດກິລາໃນທົ່ວສັງຄົມ ໂດຍປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ເພື່ອມອບໃຫ້ສະຫະພັນກິລາຍິງປືນແຫ່ງຊາດ ເປັນຜູ້ຄຸ້ມຄອງການນຳໃຊ້ຕາມລະບຽບການ.

**ມາດຕາ 22 ການນຳໃຊ້ອາວຸດກິລາ**

ອາວຸດກິລາ ໃຫ້ນຳໃຊ້ເຂົ້າໃນການ ຝຶກຊ້ອມ ແລະ ແຂ່ງຂັນ ຕາມກົດລະບຽບຂອງການແຂ່ງຂັນກິລາແຕ່ລະປະເພດ ເປັນຕົ້ນ ກິລາຍິງປືນ, ກິລາຍິງທະນູ ແລະ ກິລາຊັດຫຼາວ. ພາຍຫຼັງສິ້ນສຸດການຝຶກຊ້ອມ ແລະ ແຂ່ງຂັນແລ້ວ ໃຫ້ສົ່ງອາວຸດດັ່ງກ່າວ ຄືນໜ່ວຍງານທີ່ຮັບຜິດຊອບ ເພື່ອເກັບຮັກສາໄວ້.

**ມາດຕາ 23 ການນຳເອົາອາວຸດກິລາ ເຂົ້າ-ອອກ ສປປລາວ**

ການນຳເອົາອາວຸດກິລາ ເຂົ້າ ສປປ ລາວ ຂອງຕ່າງປະ

ອ່ານຕໍ່ສະບັບໜ້າ...

## ສຳເລັດ...

(ຕໍ່ຈາກໜ້າ 1)

ຈຳປີ 2022 ຂອງຕົນ ດ້ວຍຜົນສຳເລັດອັນຈົບງາມ ໂດຍການປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ, ເຂົ້າຮ່ວມມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດທັງເປັນຜູ້ຊີ້ນຳກຳມາທິການບັນດາເຜົ່າ; ມີບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການ, ຮອງລັດຖະມົນຕີ, ກຳມະການຂອງກຳມາທິການບັນດາເຜົ່າ ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ເພື່ອສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2023 ຂອງກຳມາທິການບັນດາເຜົ່າ; ເພື່ອເກັບກຳຂໍ້ມູນຈາກຄຳເຫັນຂອງບັນດາທ່ານກຳມະການຂອງກຳມາທິການ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ຕໍ່ສະພາບບັນຫາທີ່ພົ້ນເດັ່ນໃນວຽກງານຊົນເຜົ່າ, ແນວໂຮມ-ສາສະໜາ, ອົງການຈັດຕັ້ງມະຫາຊົນ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, 3 ສ້າງ ແລະ ວຽກງານອື່ນທີ່ກ່ຽວຂ້ອງກັບພາລະບົດບາດຂອງກຳມາທິການບັນດາເຜົ່າ ພ້ອມທັງປຶກສາຫາລືທິດທາງແກ້ໄຂໃນຕໍ່ໜ້າ.

ກອງປະຊຸມ ໄດ້ຮັບຟັງການສະຫຼຸບລາຍງານການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງກຳມາທິການບັນດາເຜົ່າ; ບາງເນື້ອໃນກ່ຽວກັບບົດບາດ ແລະ ກົນໄກການປະສານງານຂອງ ກຳມາທິການບັນດາເຜົ່າ ກັບຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ; ບົດປະກອບຄຳເຫັນຂອງກຳມະການ ກຳມາທິການບັນດາເຜົ່າ ເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, 5 ແຂວງບໍ່ແກ້ວ, 8 ແຂວງຫົວພັນ ແລະ 12 ແຂວງຄຳມ່ວນ ເຊິ່ງບັນດາທ່ານໄດ້ຍົກເອົາບົດຮຽນປະສົບການທີ່ສຳຄັນດ້ານຕ່າງໆຢູ່ທ້ອງຖິ່ນເຂດເລືອກຕັ້ງຂອງຕົນມາແລກປ່ຽນນຳກອງປະຊຸມ, ພ້ອມກັນນັ້ນ ກໍໄດ້ຮັບຟັງບົດປະກອບຄຳເຫັນຂອງກະຊວງ-ອົງການທີ່ກ່ຽວຂ້ອງຢູ່ສູນກາງເຊັ່ນ: ວຽກງານການປົກຄອງທ້ອງຖິ່ນ ຕິດພັນກັບວຽກງານ 3 ສ້າງ, ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນປີ 2022, ການປະຕິບັດພາລະບົດບາດໃນການຕິດຕາມ ກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ; ນອກຈາກນີ້, ຜູ້ແທນຍັງໄດ້ປະກອບຄຳເຫັນຕໍ່ຮ່າງມະຕິຂອງກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ ປະຈຳປີ 2022.

ໃນຕອນທ້າຍ, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ບົດສະຫຼຸບຜົນງານການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງກຳມາທິການບັນດາເຜົ່າ, ເຫັນວ່າໃນໄລຍະ 1 ປີຜ່ານມາ ເຖິງວ່າປະເທດເຮົາຈະພົບກັບຄວາມຫຍຸ້ງຍາກຫຼາຍປະການ ແຕ່ກຳມາທິການບັນດາເຜົ່າ ກໍຄືບັນດາທ່ານກຳມະການຂອງກຳມາທິການ ແລະ ເສນາທິການຢູ່ສູນກາງ ແລະ ທ້ອງຖິ່ນ ກໍມີຄວາມພະຍາຍາມສູງປະຕິບັດໜ້າທີ່ການເມືອງຂອງຕົນສຳເລັດເປັນຢ່າງດີ ໂດຍສະເພາະແມ່ນການປະຕິບັດໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການຈຸດສຸມຂອງສູນກາງ ແລະ ທ້ອງຖິ່ນ, ຕິດຕາມກວດກາຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ຈາກໂຄງການພັດທະນາຕ່າງໆ ແລະ ບາງບັນຫາທີ່ພົ້ນເດັ່ນ ໃນບົດລາຍງານຂອງເຂດເລືອກຕັ້ງ ທີ 4 ແຂວງອຸດົມໄຊ, 5 ແຂວງບໍ່ແກ້ວ, 8 ແຂວງຫົວພັນ ແລະ 12 ແຂວງຄຳມ່ວນ. ພ້ອມທັງປະສານສົມທົບກັບກຳມາທິການຕ່າງໆຂອງສະພາແຫ່ງຊາດ, ກະຊວງ-ອົງການ ແລະ ທ້ອງຖິ່ນໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຕົນມີຜົນສຳເລັດດີພໍສົມຄວນ. ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ເນັ້ນບາງບັນຫາເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານໃນຕໍ່ໜ້າມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ເປັນຕົ້ນເພີ່ມຄວາມເອົາໃຈໃສ່ວຽກງານໂຄສະນາ-ສຶກສາອົບຮົມປະຊາຊົນຕາມແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອຮັກສາໄດ້ມູນເຊື້ອຄວາມສາມັກຄີປອງດອງພາຍໃນຊາດ; ສາມາດປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ກໍຄືພາລະບົດບາດຂອງກຳມາທິການບັນດາເຜົ່າ ເປັນຕົ້ນແມ່ນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ໃນຂົງເຂດວຽກງານຊົນເຜົ່າ, ສາສະໜາ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກອງທຶນຫຼຸດຜ່ອນຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່, ການສ້າງບ້ານພັດທະນາ, ວຽກງານ 3 ສ້າງ, ໂຄງການລົງທຶນທີ່ສ້າງຜົນກະທົບຕໍ່ຊີວິດການເປັນຢູ່ ແລະ ສິ່ງແວດລ້ອມ; ການຕິດຕາມກວດກາໂຄງການທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ຈາກການສະເໜີຂອງພໍ່ແມ່ປະຊາຊົນ, ຈາກສາຍດ່ວນຂອງສະພາແຫ່ງຊາດ, ຈາກທາງສຽງຂອງສັງຄົມ, ຈາກການລາຍງານ ແລະ ສະເໜີຂອງອົງການຈັດຕັ້ງ. ຜ່ານມາ ກຳມາທິການບັນດາເຜົ່າ ຮ່ວມກັບກຳມາທິການອື່ນ ໄດ້ສົມທົບກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນແຂວງ ໄດ້ລົງຕິດຕາມກວດກາ ແລະ ເຫັນຜົນກະທົບຕົວຈິງຕໍ່ປະຊາຊົນ ແລະ ສິ່ງແວດລ້ອມແທ້, ແຕ່ຂອດຂອງການແກ້ໄຂຂອງພາກສ່ວນກ່ຽວຂ້ອງ ນັບທັງທ້ອງຖິ່ນ ແລະ ສູນກາງ ແມ່ນຊັກຊ້າ ແລະ ບໍ່ດີເທົ່າທີ່ຄວນ. ຕໍ່ການແກ້ໄຂຜົນຂອງການຕິດຕາມກວດກາປາກົດການຫຍໍ້ທໍ້ດ້ານຕ່າງໆນີ້ ປະທານສະພາແຫ່ງຊາດ ແມ່ນເນັ້ນແລ້ວເນັ້ນອີກທຸກຄຳສະເໜີຂອງປະຊາຊົນ ຕ້ອງໄດ້ຮັບການແກ້ໄຂ ແລະ ຕ້ອງແຈ້ງຜົນຂອງການແກ້ໄຂດັ່ງກ່າວ ໃຫ້ປະຊາຊົນຮັບຊາບ ແລະ ຕ້ອງເພີ່ມທະວີຄວາມໃກ້ສິດຕິດແທດໃນການແກ້ໄຂຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ຕົ້ນຕໍແມ່ນໃຫ້ເຂົາເຈົ້າເຂົ້າໃຈຈຸດປະສົງຂອງການພັດທະນາ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ ໂດຍສະເພາະແມ່ນຜູ້ຕ້ອງໄດ້ຍົກຍ້າຍໄປຢູ່ບ້ານຈັດສັນໃຫ້ສອດຄ່ອງຕາມເນື້ອໃນດຳລັດ 384/ນຍ ໂດຍໃຫ້ຊີວິດຂອງປະຊາຊົນດີຂຶ້ນກວ່າເກົ່າ ຫຼື ເທົ່າເກົ່າ; ຍົກສູງຄຸນນະພາບກົນໄກປະສານງານ ແລະ ການສ່ອງແສງລາຍງານສະພາບທີ່ພົ້ນເດັ່ນໃນແຕ່ລະໄລຍະຕ້ອງວ່ອງໄວ ແລະ ທັນການ.

(ສົມນຶກ ແກ້ວໄຊຍະຈັກ)




# ວັດຖຸມາແຮງແທ້ບໍ່?

# ດົ້ນກົບເມກ

ຍຸກນີ້ ເບິ່ງຄືວ່າສິນທຳ ແລະ ປະເພນີຫຼຸດຄ່າໜ້ອຍຖອຍລົງ ຈົນເຮັດໃຫ້ຫຼາຍຄົນຫຼາຍຄູ່ບໍ່ຖືຊາ-ບໍ່ເອົາໃສ່ໃຈແລ້ວອັນຖືກຕ້ອງເໝາະສົມ ແຕ່ເລືອກເອົາແນວໃດໃສ່ຖົງ ຫຼື ແນວໃສ່ປາກກິນໄດ້ ເຊິ່ງສະແດງວ່າວັດຖຸມາແຮງກວ່າຈິດໃຈ ທີ່ຫຼາຍຄົນບໍ່ກ້າປະຕິປາກບໍ່ເວົ້າ ແຕ່ຈິດໃຈກໍເປັນແນວນັ້ນແທ້ ເຊິ່ງອາດຈະມີໜ້ອຍຄົນຢູ່ທີ່ເຫັນຄ່າສິນທຳ-ຮີດຄອງປະເພນີ ແຕ່ຫຼາຍຄົນທີ່ເຫັນວັດຖຸດີກວ່າ ຍົກຕົວຢ່າງຝ່າຍຊາຍຮູ້ວ່າຝ່າຍຍິງມີຄົນຮັກລ້ຽງດູຊ່ວຍເຫຼືອເງິນຄຳ ແຕ່ຝ່າຍຊາຍກໍສາມາດຮັກແຮງແຊງໜ້າໄດ້ໂດຍບໍ່ສົນວ່າເຂົາມີຄົນຮັກຢູ່ແລ້ວ ຂໍແຕ່ມີໂອສິນທຳ, ວັດທະນະທຳ, ຮີດຄອງປະເພນີ ບໍ່ຖືກເຊີດຊູສົ່ງເສີມໃຫ້ເຂັ້ມແຂງ, ຄົນເຄົາລົບວັດທະນະທຳຖືກຫົວຂວັນເຢາະເຢີ້ຍ ແຕ່ຄົນເກັ່ງດື່ມເຫຼົ້າເບຍ, ທ່ຽວເກັ່ງ-ເຈົ້າຊູ້ເກັ່ງ ຖືກເອີ່ຍຍ້ອງ-ຊົມເຊີຍຈາກປາກໝູ່ພວກ ມັນກໍກາຍເປັນສິ່ງທີ່ໝູ່ເພື່ອນຢາກເອົາແບບຢ່າງ ແນວບໍ່ມີໃຜເຫັນວ່າມັນຜິດ-ຂໍພຽງ



ເສດໄດ້ດອກ! ຜູ້ຂຽນຂໍຍົກເອົາບາງປະເດັນບາງກໍລະນີຂອງຍິງ-ຊາຍຮັກກັນ, ບາງຄອບຄົວທີ່ສະໝັກໃຈແຍກປະຢ່າຮ້າງກັນ ເຊິ່ງຫຼາຍກໍລະນີເກີດຈາກບັນຫາຊັບສິນເງິນຄຳ.

ຍຸກນີ້, ຢ່າລືມວ່າ ໃນເມື່ອວັດຖຸເງິນຄຳມາແຮງບວກໃສ່ຄ່ານິຍົມສຸກງ່າໃດກິນງ່ານັ້ນ ໃຜລ້ຳລວຍວັດຖຸກໍເທີ່ຍ້ອງເຊີດຊູກັນ ເຖິງແມ່ນວ່າຫຼາຍຄົນບໍ່ກາດ ແມ່ນບໍ່ສົນນຳກຽດສັກສີ, ບໍ່ສົນນຳສາຍຕາອ້ອມຂ້າງ ເບິ່ງຄືວ່າ ຄົນບາງພວກທຸກມື້ບໍ່ຖືກຽດ ແຕ່ຖືເອົາແນວມີກິນ.

ບູຮານວ່າ: ມີຝອຍ ໝາຈິ່ງຂີ້ ໝາຍຄວາມວ່າ ຜິດຕິກຳໃດໜຶ່ງ ບໍ່ແມ່ນຈະເກີດຂຶ້ນມາລອຍໆ ແຕ່ມັນຕ້ອງມີຕົວຢ່າງ ຫຼື ມີທີ່ມາຈາກຄົນໜຶ່ງ ຫຼື ຈາກລຸ້ນໜຶ່ງຕໍ່ໃສ່ອີກລຸ້ນໜຶ່ງ ດັ່ງນັ້ນ, ຈຶ່ງເກີດຄຳຖາມວ່າ ແຕ່ໄດ້ສິ່ງທີ່ຕົນຢາກໄດ້ ແຕ່ບໍ່ສົນໃຈສິນທຳ-ລະບຽບປະເພນີ.

ຜູ້ຂຽນບໍ່ໄດ້ເຈຕະນາເຈາະຈົງກະແທກແດກດັນໃສ່ຜູ້ໃດ ແຕ່ມັນເປັນພຽງແງ່ຄິດເພື່ອເບິ່ງໄປອະນາຄົດໄລຍະຍາວວ່າ ຈະມີຜົນແນວໃດຕື່ມ ຖ້າວ່າເຮົາບໍ່ສະເໜືອກຕື່ນວ່າອັນໃດຄວນ ແລະ ບໍ່ຄວນ...!

ສະເໜີແລກປ່ຽນ!!!

# "ພະຍາດອາດຍາສິດ"

# ໂດຍ: ສອນໃຈ ສາຍນ້ຳຊຳ



ບັນດາທ່ານຜູ້ອ່ານ ອາດຈະເຄີຍໄດ້ຍິນຢູ່ເລື້ອຍໆ ຄຳວ່າ "ອາດຍາສິດ ຫຼື ພະຍາດອາດຍາສິດ" ແຕ່ບາງທ່ານ ອາດຈະບໍ່ທັນເຂົ້າໃຈວ່າມີຄວາມໝາຍແນວໃດ ແລະ ເປັນພະຍາດແນວໃດ? ແລະ ຖ້າເປັນພະຍາດນີ້ ມີຄວາມອັນຕະລາຍຮ້າຍແຮງຫຼາຍສ່ຳໃດ ແລະ ສາມາດມີຢາປິ່ນປົວໄດ້ບໍ່?.

ຄຳວ່າ "ອາດຍາສິດ" ໝາຍເຖິງການໃຊ້ອຳນາດເກີນຂອບເຂດ, ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຫຼື ການໃຊ້ອຳນາດຂອງຕົນເກີນຂອບເຂດ ຫຼື ໃຊ້ອຳນາດເດັດຂາດ ເພື່ອບັງຂັບຜູ້ອື່ນນຳເອົາເງິນຄຳ, ຊັບສິນ ຫຼື ຊັບສົມບັດມອບໃຫ້ ຫຼື ຍົກໃຫ້ຕົນເອງ.

ອາດຍາສິດ ຫລື ພະຍາດອາດຍາສິດ ເປັນພະຍາດໜຶ່ງທີ່ມີຄວາມອັນຕະລາຍຮ້າຍແຮງຫຼາຍທີ່ສຸດ ແລະ ກຳລັງແຜ່ລະບາດຫຼາຍຢູ່ໃນສັງຄົມລາວປັດຈຸບັນ; ພະຍາດນີ້ສ່ວນຫຼາຍມັກຈະເກີດຂຶ້ນຫຼາຍກັບພະນັກງານ-ລັດຖະກອນ, ທະຫານ ແລະ ຕຳຫຼວດ ຜູ້ທີ່ມີບົດບາດ ແລະ ຕຳແໜ່ງທາງບໍລິຫານ ເຊິ່ງສາເຫດດັ່ງກ່າວແມ່ນເກີດຈາກຄວາມໂລບມາກໂລພາ, ຄວາມເຫັນແກ່ຕົວຂອງບຸກຄົນດັ່ງກ່າວ ຈຶ່ງໄດ້ມີການນຳໃຊ້ບົດບາດ, ອຳນາດ, ສິດ ແລະ ໜ້າທີ່ເກີນຂອບເຂດ, ກອບໂກຍເອົາເງິນຄຳ, ຊັບສົມບັດ ຫຼື ສິ່ງຂອງເພື່ອສ້າງຄວາມຮັ່ງມີໃຫ້ແກ່ຕົນເອງ.

ພະຍາດອາດຍາສິດແມ່ນບໍ່ສາມາດປິ່ນປົວໄດ້ ແລະ ບໍ່ສາມາດປົວ ຫຼື ຮັກສາດ້ວຍຢາຊະນິດແບບທຳມະດາໄດ້ ມັນຕ້ອງໄດ້ນຳໃຊ້ຢາທີ່ມີປະສິດທິພາບສູງສຸດ ແລະ ຂັ້ນເດັດຂາດ ຈຶ່ງສາມາດລະງັບ, ປາບປາມການແຜ່ລະບາດພະຍາດນີ້ໄດ້ ດ້ວຍການນຳໃຊ້ມາດຕະການທາງດ້ານກົດໝາຍທີ່ເຂັ້ມງວດ ເພື່ອເຮັດໃຫ້ຜູ້ທີ່ເປັນພະຍາດອາດຍາສິດນີ້ ມີສະຕິຢາກປິ່ນປົວຕົນເອງ ຫຼື ຢ້ານກົວ ແລະ ປະພຶດຕົນຮັບໃຊ້ຊາດ ໃຊ້ປະຊາຊົນດ້ວຍຄວາມບໍລິສຸດ ເພື່ອບໍ່ໃຫ້ຕົນເອງຕິດເຊື້ອພະຍາດຊະນິດນີ້.






**-ລຳ:** ໃນຄຳສັບທີ່ວ່າ "ລຳ" ຍ່ອມມີຫຼາຍຄວາມໝາຍ. ຖ້າເປັນໜັງສືພູກໃບລານກ່ຽວເລື່ອງນິທານອັນນະກາຕ່າງໆ ທີ່ຈານໃສ່ໃບລານ (ຈານ ແມ່ນການຂຽນດ້ວຍເຫຼັກຈານ) ຈະແມ່ນໜັງສືທຳ ຫຼື ໜັງສືລາວເດີມ ກໍເອີ້ນວ່າ ລຳເຊັ່ນກັນ ເຊັ່ນ: ເລື່ອງກາລະເລື່ອງສັງສິນໄຊ. ນາງແຕງອ່ອນ ແລະ ອື່ນໆ ທີ່ເປັນເລື່ອງຍາວ. ໃນຄຳວ່າລຳດັ່ງກ່າວມານັ້ນເວລາເພິ່ນອ່ານໃຫ້ຄົນຟັງເພິ່ນຈະຂຶ້ນສຽງຕາມລັກສະນະຄ້າຍ ກັບສຽງລຳ. ເວລາພະສົງເທດ ເພິ່ນກໍໃຊ້ສຽງ ເຊິ່ງມາໃນຮູບແບບສັບເອີ້ນວ່າ: ນຳຈົນ ຫຼື ນຳຮ້າຍ ເພາະບາງຄົນກິນເມົາແລ້ວຮ້າຍເລີຍ. ຈົນ ຍັງແມ່ນຊື່ຈຳພວກຕົ້ນໄມ້ແນວໜຶ່ງ ເຊິ່ງເອີ້ນກັນວ່າ ໄມ້ຈັນ ເຊິ່ງເປັນປະເພດໄມ້ມີຄຸນ ກໍມີ ແລະ ບໍ່ເປັນໄມ້ມີຄຸນກໍມີ. ຈຳພວກທີ່ເປັນໄມ້ມີຄຸນໄດ້ແກ່: ຈັນຫອມ. ຈັນຄູ່. ຈັນແດງ. ຈັນໄດ. ຈັນຂາວ.... ນອກນີ້ ຍັງມີໄມ້ຈັນທຳມະດາອີກເຊັ່ນ: ກົກໝາກຈັນ. ສຳລັບກົກໝາກຈັນນີ້ ໜ່ວຍໝາກຂອງມັນຄ້າຍຄືໜ່ວຍໝາກກ້ຽງ ເຊິ່ງສາມາດນຳມາກິນໄດ້ ເພາະມີລົດຫວານເລັກນ້ອຍ. ກ່ອນປີ 1995 ມີກົກຈັນ ກົກໜຶ່ງ ຢູ່ໃນໂພນກາງໜອງຈັນທີ່ວ່າຈາກຕະຫຼາດຂົວດິນລົງໄປໃກ້ກັບຄອມເຊັນເຕີ ປັດຈຸບັນ. ເມື່ອມັນມີໝາກສຸກເຫຼືອງ ກໍມີຄົນຂີ່ເຮືອໄປເກັບເອົາໝາກຈັນມາກິນ (ແຕ່ກ່ອນມີແມ່ຕູ້ເທົ່າຢູ່ຂ້າງໜອງຈັນ ເບື້ອງຝັ່ງດົງປ່າລານ ເພິ່ນມີເຮືອສຳລັບຂີ່ໄປເອົາໝາກຈັນຢູ່ກາງໜອງຈັນ).

ມີອີກຄຳສັບໜຶ່ງ ບອກວ່າ: ຈັນທະນະ ແປວ່າ ໄມ້ຈັນ ຍັງມີຄຳວ່າ: ຈັນທະນະຄີລີ ເຊິ່ງແປວ່າ ພູໄມ້ຈັນ ໄດ້ແກ່ ພູເຂົາຫິມມະໄລ. ຈັນເປັນສັບພາສາລາວ ແລະ ພາສາບາລີ.



# ໂລກຊຶມເສົ້າ

ສຸກສະບາຍຫາຍໂຣຄາ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ

ໃນໂລກປັດຈຸບັນທີ່ເຕັມໄປດ້ວຍບັນຫາ ແລະ ສະຖານະການທີ່ເຄັ່ງຕຶງ ອາດຈະກະຕຸ້ນໃຫ້ເກີດການປ່ຽນແປງທາງອາລົມ, ຄວາມຮູ້ສຶກໄດ້ ເຊັ່ນ: ໂລກຊຶມເສົ້າ, ເບື່ອໜ່າຍ... ເຊິ່ງອາລົມຊຶມເສົ້າເປັນອາລົມທີ່ເກີດຂຶ້ນໄດ້ເອງຕາມທຳມະຊາດຂອງມະນຸດ ແຕ່ຖ້າອາການຊຶມເສົ້າຫາກຢູ່ນຳເຮົາເປັນເວລາດົນໆ ແລະ ບໍ່ໄດ້ຮັບການແກ້ໄຂ ກໍມີໂອກາດກໍ່ໃຫ້ເກີດການປ່ຽນແປງທາງຮ່າງກາຍ ໂດຍຈະເຮັດໃຫ້ສານເຄມີໃນສະໝອງເກີດຄວາມບໍ່ສົມດູນ ທີ່ສົ່ງຜົນຕໍ່ອາລົມຊຶມເສົ້າຂອງມະນຸດ ຈົນພາໃຫ້ເກີດເປັນໂລກຊຶມເສົ້າໄດ້ ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີບົດຄວາມສັ້ນກ່ຽວກັບໂລກຊຶມເສົ້າ ມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ນຳກັນ.



ຈາກການສຶກສາທາງການແພດ ໃນປັດຈຸບັນພົບວ່າ ໂລກຊຶມເສົ້າເກີດຈາກຄວາມບໍ່ສົມດູນກັນຂອງສານເຄມີໃນສະໝອງ 3 ຊະນິດຄື: ຊີໂລໂທນິນ (serotonin), ນໍເອພີເນຟຣິນ (norepinephrine) ແລະ ໂດປາມີນ (dopamine) ທີ່ສົ່ງຜົນກະທົບຕໍ່ອາລົມ, ຄວາມຄິດ ແລະ ພຶດຕິກຳ ເຊິ່ງຈະຕ່າງຈາກອາລົມເສົ້າປົກກະຕິຕາມທຳມະຊາດຂອງມະນຸດທີ່ຈະດີຂຶ້ນເອງ ເມື່ອຄວາມຕຶງຄຽດໝົດໄປ; ດັ່ງນັ້ນ, ເມື່ອອາລົມຊຶມເສົ້າມີສາເຫດຈາກການປ່ຽນແປງພາຍໃນຮ່າງກາຍ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຮັບການປິ່ນປົວຢ່າງເໝາະສົມ ເພາະມັນບໍ່ສາມາດດີເອງໄດ້.

ໂລກຊຶມເສົ້າມີຫລາຍລະດັບ ຕັ້ງແຕ່ອາການນ້ອຍໃຈໄປຈົນເຖິງລະດັບຮຸນແຮງທີ່ກະທົບຕໍ່ການດຳລົງຊີວິດ ອາການເບື້ອງຕົ້ນອາດຈະເປັນສັນຍານເຕືອນໃຫ້ສົງໄສວ່າ ອາດຈະມີໂລກຊຶມເສົ້າເກີດຂຶ້ນກໍເປັນໄດ້ ແລະ ບໍ່ຄວນປ່ອຍປະລະເລີຍຈົນຢູ່ໃນລະດັບທີ່ຮຸນແຮງ ເຊິ່ງອາການເບື້ອງຕົ້ນຂອງໂລກຊຶມເສົ້າມີດັ່ງນີ້:

- ຮູ້ສຶກເສົ້າ, ຫົດຫູ່, ທໍ້ ແລະ ຮ້ອງໄຫ້ແບບບໍ່ມີສາເຫດ ກັງວົນ ຫລື ໂມໂຫງ່າຍ ຈົນສົ່ງຜົນກະທົບຕໍ່ໜ້າທີ່ການງານ, ຄວາມສຳພັນຕໍ່ຄົນຮອບຂ້າງ ຫລື ສູນເສຍຄວາມສາມາດໃນການເບິ່ງແຍງດູແລຕົນເອງ;
- ສູນເສຍຄວາມສົນໃຈໃນຫຼາຍກິດຈະກຳ, ບໍ່ຢາກເຮັດໃນສິ່ງທີ່ເຄີຍມັກ, ເກັບໂຕ ແລະ ບໍ່ສົນໃຈກັບສິ່ງຮອບ ຂ້າງ;
- ເບື່ອອາຫານ, ນໍ້າໜັກຫຼຸດ ຫລື ອາດຈະກິນຫາຫານຫຼາຍກວ່າປົກກະຕິ;
- ນອນບໍ່ຫຼັບ, ຫຼັບບໍ່ແຈບ ຫລື ນອນຫຼັບເລິກຫຼາຍເກີນໄປ;
- ການເຄື່ອນໄຫວຊັກຊ້າອືດອາດ ຫລື ອາດຈະກະວົນກະວາຍຫຼາຍເກີນໄປ;
- ອ່ອນເພຍ ແລະ ບໍ່ມີເຫື່ອບໍ່ມີແຮງ;
- ຄວາມຕັ້ງໃຈໜ້ອຍລົງ, ສະມາທິສັ້ນ ແລະ ຄວາມຈື່ຈຳບໍ່ດີ;
- ຮູ້ສຶກໂຕເອງບໍ່ມີຄ່າ, ສິ້ນຫວັງ, ຄິດວ່າໂຕເອງເປັນພາລະ ແລະ ສູນເສຍຄວາມໝັ້ນໃຈໃນໂຕເອງ;
- ບໍ່ຢາກມີຊີວິດ ແລະ ຄິດເຖິງການຕາຍຫຼາຍຂຶ້ນເລື້ອຍໆ.

www.praram9.com

ອາດ ກະວີລາວ

## ໜັງສືພິມ "ຜູ້ແທນປະຊາຊົນ"

# ໂດຍ: ກົງໃຈ ແສງອຳພັນ

(ເນື່ອງໃນວັນສ້າງຕັ້ງວາລະສານ ແລະ
ໜັງສືພິມ "ຜູ້ແທນປະຊາຊົນ" 18/1/2012-18/1/2023)

| | |
|---|---|
| ❈ ທີ 18 ແມ່ນມື້ | ກຳເນີດໜັງສືພິມ |
| "ຜູ້ແທນປະຊາຊົນ" | ຂວບ 11 ປີໄດ້ |
| ເປີດສາກໄຂຕົວຂຶ້ນ | ເດືອນມັງກອນທີ 18 |
| ປີ 2012 ເລີ່ມຕົ້ນ | ຢືນຄຽງຂ້າງຄູ່ສະພາ |
| ❈ ກ່ອນໜ້ານັ້ນເພິ່ນເອີ້ນ | ເປັນສື່ວາລະສານ |
| ອອກເປັນລາຍສາມເດືອນ | ພັດທະນາມາເລື້ອຍ |
| ຈາກນັ້ນຜັນແປປີ້ນ | ເປັນລາຍເດືອນອອກຈຳໜ່າຍ |
| ໜັງສືພິມຈຶ່ງກຳເນີດເກີດໄດ້ | ຕາມທ້າຍຕໍ່ມາ |
| ❈ ສື່ສະພາປະກາດກ້ອງ | ໄຂຂ່າວຫຼາຍບັນຫາ |
| ການເຄື່ອນໄຫວຂອງສະພາ | ແຕ່ເໜືອເຖິງໃຕ້ |
| ສາມາດຕິດຕາມໄດ້ | ໜັງສືພິມຮີບຈັບຈ່ອງ |
| ວິທະຍຸໂທລະພາບດັງລັ່ນກ້ອງ | ໂຄສະນາເລື້ອງວຽກຜູ້ແທນ |
| ❈ ເນື້ອໃນໜັກເດັ່ນແໜ້ນ | ການເມືອງຜ່ຳກົດໝາຍ |
| ກະຈາຍວຽກຂອງສະພາ | ສູ່ສາຍຕາສັງຄົມກວ້າງ |
| ການເຄື່ອນໄຫວ ສສຊ-ສສຂ ພ້ອມ | ພິມລົງກະຈາຍຂ່າວ |
| ປ່າວປະກາດໂລກຮູ້ | ມີອຳຊ້ອນເຊື່ອງໃນ |
| ❈ ການນຳໄຂຂອດແກ້ | ບັນຫາສິ່ງຄາໃຈ |
| ຂອງປະຊາຊົນລາວ | ທົ່ວແດນດິນພົ້ນ |
| ກະບອກສຽງລາຍງານແຈ້ງ | ຈັດແຈງເປັນບົດຂ່າວ |
| ປ່າວປະກາດປີກໍ່ຕັ້ງ | ໜັງສືພິມຜ່ຳພ້ອມ |
| ວາລະສານກ່ອນໜ້ານັ້ນ | ປະພັນກ່ຽວກ່າວເຖິງ ນີ້ແລ້ວ! |



## ຟ້າຫ່າຍ ສະບາຍ

(ເສື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❈ **ພາຍຫລັງ**ກອງປະຊຸມສະໄໝສະມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເສັດສິ້ນລົງ ຕໍ່ໄປຄົງໜັກໜ້າ ທາງສະພາປະຊາຊົນແຂວງທົ່ວປະເທດ ສສຂ ຝ່າຍເບື້ອງ ກະກຽມພ້ອມເຄື່ອນໄຫວ ຂໍເປັນກຳລັງໃຈໃຫ້ **ສສຊ-ສສຂ** ໝົດທຸກທ່ານ ປະຕິບັດວຽກງານ ຈົ່ງສຳເລັດລາບລື້ນ ປະຊາຫຸ້ມຮັກຫອມ **ທ່ານເອີຍ!**

❈ **ທ່ານ**ຈັບຢູ່ໃນຕອນນີ້ ເປັນໜັງສືພິມສະບັບທີ 906 ແລະ ເປັນສະບັບ**ທີ 3** ຂອງປີ **2023** ນັບແຕ່ພວກເຮົາມີການປັບປຸງປ່ຽນແປງຈາກ **8 ມາເປັນ 12 ໜ້າ** ແລະ ຈາກສອງສະບັບຕໍ່ອາທິດ ມາເປັນລາຍສັບປະດາ ເຊິ່ງໃນບົດກອນຊ້າງໆຄໍລຳນີ້ ປະພັນໄວ້ເກືອບລະອຽດແລ້ວວ່າ ມີປະຫວັດຄວາມເປັນມາຄືແນວໃດ ໃນໂອກາດຄົບຂວບ ວັນກຳເນີດ **11 ປີ** ຂໍອາໄສເວທີ ຝາກຄວາມສຸກຕ້ອນ ຂໍອວຍພອນໄຊໃຫ້ ໝົດທຸກຄົນນັກອ່ານ ມີຄວາມສຸກລາບລື້ນ ລອຍລົ້ນຕະຫລອດໄປ ທຸກ**ທ່ານເດີ!**

## ຊອບຍິ້ມ

# ແອ່ນຕຸ້ງ



**ເລື່ອງ: ທັດທືຫລັງດັງກວ່າ**

ແມ່ປ້າຄົນໜຶ່ງພະຍາຍາມຊອກບ່ອນຈອດລົດ ແຕ່ບໍ່ມີບ່ອນຈອດ, ລາວຖ້າບຶດໜຶ່ງພໍດີມີລົດຄັນໜຶ່ງແລ່ນອອກ ລາວຈຶ່ງຂັບຄ່ອຍໆເພື່ອໄປຈອດແທນບ່ອນ, ບັງເອີນມີໄວລຸ້ນຄົນໜຶ່ງຂັບລົດມາຈອດກ່ອນ ຫລັງຈາກຈອດຮຽບຮ້ອຍ ກໍໄຂປະຕູລົດອອກມາຍິ້ມໃສ່ແມ່ປ້າຄົນນັ້ນ ພ້ອມທັງເວົ້າວ່າ: - ໜຸ່ມ ແລະໄວກວ່າ ຮາໆ ຫລັງຈາກນັ້ນ ແມ່ປ້າກໍຖອຍລົດແລ້ວຂັບໄປຕໍາລົດໄວລຸ້ນຄົນນັ້ນ ແລ້ວກໍລົງມາຍິ້ມໃສ່ພ້ອມທັງເວົ້າວ່າ : - ເຖົ້າ ແລະ ລວຍກວ່າ ຮາໆ

## ຄະຕິເຕືອນໃຈ

# ດອກຂະຍອມ

ຈົດທົບໃຫ້ໄດ້ດັ່ງກ້ອນຫີນ
ຕິດດິນໃຫ້ໄດ້ດັ່ງຕົ້ນຫຍ້າ
ເຂັ້ມແຂງໃຫ້ໄດ້ດັ່ງເຫຼັກກ້າ
ອ່ອນໂຍນແຕ່ບໍ່ອ່ອນແອດັ່ງຫາລາ




# ຂອບໃຈ_ຄອບໃຈ

*ເວລາທີ່ພວກເຮົາເຮັດອັນໃດອັນໜຶ່ງແກ່ຜູ້ໃດຜູ້ໜຶ່ງດ້ວຍຄວາມເຕັມໃຈ ແລ້ວໄດ້ຍິນຄຳວ່າ **"ຂອບໃຈ"** ຫຼື **"ຂອບໃຈເດີ້"** ຫຼື **"ຂອບໃຈຫຼາຍໆເດີ້"**, ເຮົາກໍຈະຮູ້ສຶກມີຄວາມມ່ວນຊື່ນໃນຈິດໃຈທັນທີ ພ້ອມທັງມີຄຳຕອບກັບໄປວ່າ "ບໍ່ເປັນຫຍັງ" ລາງເທື່ອ ເຮົາກໍຕື່ມຄຳວ່າ "ດອກ" ເຂົ້າໄປ ເຮັດໃຫ້ກາຍເປັນ "ບໍ່ເປັນຫຍັງດອກ". ຄຳເວົ້າດັ່ງກ່າວນັ້ນ ສາມາດເຮັດໃຫ້ທັງຜູ້ກ່າວ "ຂອບໃຈ" ແລະ ຜູ້ຮັບຄຳຂອບໃຈ ຕ່າງກໍມີຄວາມຮູ້ສຶກດີໆຕໍ່ກັນ.*

*ແຕ່ກໍມີບາງກໍລະນີ ເຮົາໄດ້ເຮັດສິ່ງໃດສິ່ງໜຶ່ງໃຫ້ຜູ້ໃດຜູ້ໜຶ່ງ ເຮັດໄປແລ້ວເຮົາກໍຮູ້ສຶກພາກພູມໃຈ ແຕ່ຍັງບໍ່ທັນເຕັມຮ້ອຍ ຫາກບໍ່ໄດ້ຮັບຄຳວ່າ **"ຂອບໃຈ"** ຈາກຜູ້ທີ່ເຮົາໄດ້ເຮັດສິ່ງໃດສິ່ງໜຶ່ງແກ່ເຂົາໄປແລ້ວ. ໃນຊີວິດຕົວຈິງ ກໍຍັງມີບາງຄົນທີ່ບໍ່ຮູ້ກ່າວຄຳຂອບໃຈ ເຖິງຈະມີຜູ້ໃດຜູ້ໜຶ່ງໄດ້ຊ່ອຍ ຫຼື ໃຫ້ອັນໃດອັນໜຶ່ງແກ່ຕົນກໍຕາມ. ຫາກຄົນຜູ້ໃດບໍ່ຫັດກ່າວຄຳຂອບໃຈແກ່ຜູ້ທີ່ມີພະຄຸນຕໍ່ຕົນແລ້ວ ຄົນຜູ້ນັ້ນກໍຄົງມີໂອກາດກ້າວໄປສູ່ຄວາມເປັນຄົນທີ່ກ້າວໜ້າສີວິໄລໄດ້ຍາກ.*

*ແຕ່ກໍມີຫຼາຍຄົນສົນໃຈທີ່ມາຂອງການໃຊ້ຄຳ **"ຂອບໃຈ"** ວ່າພວກເຮົາໃຊ້ມາໄດ້ດົນປານໃດແລ້ວ. ມີບາງຄົນກໍໃຫ້ຄຳຕອບວ່າ "ຮວ້າຍ! ຄຳວ່າ **'ຂອບໃຈ'** ກໍມີໃຊ້ມາແຕ່ສະໄໝອີປຸອີປູ້ພຸ້ນແລ້ວ!". ແຕ່ບາງຄົນກໍວ່າ "ຫາກໍໃຊ້ບໍ່ຮອດຮ້ອຍປີມານີ້ນ່າ!". ເພື່ອໃຫ້ກະຈ່າງແຈ້ງຕໍ່ກັບຄຳຖາມດັ່ງກ່າວ ຜູ້ຂຽນຂໍສະເໜີຫຼັກຖານການໃຊ້ຄຳ **"ຂອບໃຈ"** ດັ່ງນີ້:*

*ອີງຕາມໜັງສືຝຣັ່ງ-ລາວ (Dictionnaire et Guide Franco-Laotiens) ປີ 1895 ໄດ້ບັນຈຸຄຳວ່າ Merci ແລະ ໄດ້ແປເປັນຄວາມລາວເຊິ່ງຂຽນເປັນໂຕລາແຕັງວ່າ 'di tiay nac' (ຖອດເປັນອັກສອນລາວ "ດີໃຈນັກ") ເຊິ່ງສະແດງວ່າ ໃນຊຸມປີ 90 ຂອງສະຕະວັດທີ 19 ຄົນລາວເຮົາຍັງບໍ່ທັນໄດ້ໃຊ້ຄຳວ່າ **"ຂອບໃຈ"** ເທື່ອ.*

*ຈົນຮອດຕົ້ນສະຕະວັດທີ 20 ພວກເຮົາຈຶ່ງໄດ້ເລີ່ມໃຊ້ຄຳວ່າ "ຂອບໃຈ" ເຂົ້າໃນການສົນທະນາປາໄສ ເຊິ່ງສະແດງອອກໃນວັດຈະນານຸກົມພາສາຝຣັ່ງ-ລາວ (Nouveau Dictionnaire Français-Laotien) ປີ 1906 ທີ່ໄດ້ບັນຈຸຄຳວ່າ Merci ແລະໄດ້ແປເປັນຄວາມລາວໂດຍຂຽນເປັນໂຕລາແຕັງວ່າ khop tiay-gnin di (ຖອດເປັນອັກສອນລາວ "ຂອບໃຈ-ຍິນດີ"). ຈາກຫຼັກຖານນີ້ ສາມາດເວົ້າໄດ້ວ່າ ພວກເຮົາໄດ້ໃຊ້ຄຳວ່າ **"ຂອບໃຈ"** ມາໄດ້ຫຼາຍກວ່າຮ້ອຍປີແລ້ວ.*

*ຖ້າເຮົາໄປເປີດເບິ່ງວັດຈະນານຸກົມລາວ ໂດຍມະຫາສີລາ ວີລະວົງ ປີ 1960 ກໍຈະເຫັນຄຳວ່າ **"ຂອບໃຈ"** ທີ່ເພິ່ນໃຫ້ນິຍາມວ່າ "ດີໃຈນຳ".*

*ກໍເຊັ່ນກັນກັບວັດຈະນານຸກົມສະບັບອື່ນ ລ້ວນແຕ່ບັນຈຸທັງສອງຄຳນີ້ໄວ້ໃນວັດຈະນານຸກົມຂອງຕົນ. ໂດຍສະເພາະວັດຈະນານຸກົມພາສາລາວ ໂດຍ ດຣ. ທອງຄຳ ອ່ອນມະນີສອນ ປີ 2022 ໄດ້ໃຫ້ຄວາມໝາຍ "ຂອບໃຈ" ວ່າ "ສະແດງຄວາມຮູ້ບຸນຄຸນໃນນ້ຳໃຈທີ່ມີເມດຕາກະລຸນາ, ກ່າວຕອບແທນບຸນຄຸນ".*

*ຄຳວ່າ **"ຂອບ"** ໃນພະຍາງໜ້າຂອງ **"ຂອບໃຈ"** ໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ໄດ້ໃຫ້ຄວາມໝາຍວ່າ "ບອກ, ເລົ່າ, ບອກໃຫ້ຮູ້" ແລະບອກວ່າເປັນຄຳພ້ອງຄວາມໝາຍກັບ "ຄອບ".*

*ຈາກເຫດຜົນທີ່ວ່າ ຄຳກິລິຍາ **"ຂອບ"** ແລະ **"ຄອບ"** ມີຄວາມໝາຍອັນດຽວກັນ ຈຶ່ງພາໃຫ້ຄົນໃນບາງທ້ອງຖິ່ນທີ່ອອກສຽງວັນນະຍຸດພະຍາງນີ້ເປັນສຽງສູງຕົວສະກົດເປັນ **"ຄອບໃຈ"** ເຊິ່ງຖືວ່າ ສະກົດບໍ່ຖືກຕາມຄຳສັບມາດຕະຖານທີ່ເພິ່ນໄດ້ກຳນົດໄວ້ໃນວັດຈະນານຸກົມພາສາລາວທຸກໆເຫຼັ້ມ ແລະ ກໍເປັນຄຳທີ່ສະກົດຢ່າງເປັນທາງການ.*

*ເພື່ອສະກົດຄຳນີ້ໃຫ້ຖືກຕ້ອງຕາມສັບມາດຕະຖານທີ່ເພິ່ນໄດ້ກຳນົດໄວ້ ແລະ ເພື່ອຄວາມເປັນເອກະພາບໃນການຂຽນ ພວກເຮົາຕ້ອງໄດ້ສະກົດຄຳນີ້ເປັນ **"ຂອບໃຈ"** ບໍ່ແມ່ນ **"ຄອບໃຈ"**.*




# ຮ່ວມກັນຮັບມືກັບສິ່ງທ້າທາຍຈາກການປ່ຽນແປງຂອງດິນຟ້າອາກາດ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ຊຸນຕັນ ບິນ ອາເມັດ ຈາເບີ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ເຕັກໂນໂລຊີກ້າວໜ້າ ທັງເປັນທູດພິເສດກ່ຽວກັບການປ່ຽນແປງຂອງດິນຟ້າອາກາດຂອງປະເທດສະຫະລັດອາຣັບ ເອມິເຣດ, ປະທານກອງປະຊຸມປະເທດພາຄີໃນ "ສົນທິສັນຍາຂອບວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດສະຫະປະຊາຊາດ" ຄັ້ງທີ 28 ໃນວັນທີ 14 ມັງກອນນີ້ (ຕາມເວລາທ້ອງຖິ່ນ) ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືພະລັງງານໂລກໂດຍຮຽກຮ້ອງໃຫ້ຝ່າຍຕ່າງໆຮ່ວມມືກັນນຳໃຊ້ມາດຕະການອັນຕັ້ງໜ້າທີ່ມີລັກສະນະກວມລວມ ແລະ ຖືການເຄື່ອນໄຫວເປັນທິດຊີ້ນຳ ເພື່ອຮັບມືກັບການປ່ຽນແປງຂອງດິນຟ້າອາກາດໃນທົ່ວໂລກ.

ທ່ານ ຊຸນຕັນ ບິນ ອາເມັດ ຈາເບີ ກ່າວວ່າ: ສະຫະລັດອາຣັບເອມິເຣດ ມີສະຕິຮັບຜິດຊອບທີ່ຈະແຈ້ງ ແລະ ຄວາມຮູ້ສຶກຮີບດ່ວນອັນແຂງແຮງໃນດ້ານການກະກຽມ ກອງປະຊຸມປະເທດພາຄີໃນ "ສົນທິສັນຍາຂອບວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດສະຫະປະຊາຊາດ" ຄັ້ງທີ 28 ແລະ ຊຸກຍູ້ການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ທັງເນັ້ນໜັກວ່າ ການຊຸກຍູ້ການຈັດຕັ້ງປະຕິບັດ "ສັນຍາປາຣີ" ແມ່ນມີຄວາມຕ້ອງການຢ່າງຮີບດ່ວນ. ພ້ອມກັນນັ້ນ, ທ່ານ ຊຸນຕັນ ບິນ ອາເມັດ ຈາເບີ ຍັງຮຽກຮ້ອງໃຫ້ເພີ່ມການລົງທຶນເຂົ້າໃນພະລັງງານໝູນວຽນ, ເພີ່ມທະວີການສະໜັບສະໜູນຕໍ່ປະເທດພວມພັດທະນາ, ຮ່ວມກັນພະຍາຍາມຊຸກຍູ້ການບັນລຸເປົ້າໝາຍທີ່ປອດການປ່ອຍອາຍພິດເຮືອນແກ້ວຕໍ່ດິນຟ້າອາກາດ, ໃນຂະນະດຽວກັນທີ່ຫຼຸດການປ່ອຍກາກບອນນັ້ນ, ຈະບໍ່ຖືການເສຍສະຫຼະໃນດ້ານການພັດທະນາເສດຖະກິດ ແລະ ຄວາມກ້າວໜ້າທາງສັງຄົມນັ້ນເປັນຄ່າທົດແທນ.

**ແຫລ່ງຂ່າວ: CRI**

# ສານສູງຂອງຍີ່ປຸ່ນ ຍົກຟ້ອງອະດີດຜູ້ບໍລິຫານ ໂຮງງານນິວເຄຼຍ



ອີງຕາມການລາຍງານຂ່າວໃນວັນທີ 18 ມັງກອນຜ່ານມາ ໃຫ້ຮູ້ວ່າ: ສານສູງໃນນະຄອນຫຼວງໂຕກຽວ ປະເທດຍີ່ປຸ່ນ ໄດ້ມີຄຳຕັດສິນຕາມການຕັດສິນຂອງສານຂັ້ນຕົ້ນ ຍົກຟ້ອງໃນຄະດີຂອງອະດີດຜູ້ບໍລິຫານຂອງບໍລິສັດຜະລິດໄຟຟ້າໂຕກຽວ (TEPCO) ທັງ 3 ຄົນ ຕໍ່ຄະດີໄພພິບັດນິວເຄຼຍຢູ່ໂຮງໄຟຟ້ານິວເຄຼຍ ກຸຊິມະ ໃນແຂວງຟຸກຸຊິມະ ທາງເວັນອອກສຽງເໜືອຂອງປະເທດ ເຊິ່ງເປັນຜົນມາຈາກແຜ່ນດິນໄຫວ ແລະ ຄື້ນສຶນາມິ ເມື່ອເດືອນມີນາ 2011.

ອີງຕາມການຖະແຫຼງການຂອງສານ ເຊິ່ງໄດ້ດຳເນີນການສືບສວນຄະດີຕັ້ງແຕ່ກາງປີ 2017, ການກະທຳຂອງ ອະດີດປະທານບໍລິສັດ TEPCO ພ້ອມດ້ວຍອະດີດຮອງປະທານ 2 ຄົນ ບໍ່ມີຄວາມຜິດ ບໍ່ເປັນໄປຕາມຄຳຮ້ອງຟ້ອງຂອງໄອຍະການໃນຂໍ້ຫາ "ຂໍ້ບົກຜ່ອງ ແລະ ການລະເມີດໃນການປະຕິບັດໜ້າທີ່".

ສຳນວນຂອງໄອຍະການ ກ່າວວ່າ "ອະດີດຜູ້ບໍລິຫານສາມຄົນ ມີລົ້ມເຫລວຢ່າງແທ້ຈິງ ໃນການຄາດຄະເນທິດທາງ ແລະ ຄວາມຮຸນແຮງຂອງຄື້ນຟອງຍັກໃຫຍ່ ຫຼັງຈາກເກີດແຜ່ນດິນໄຫວຂະໜາດ 9,0 ຣິກເຕີ ວ່າຈະສ້າງຄວາມເສຍຫາຍຢ່າງໜັກໜ່ວງໃຫ້ເຕົາປະຕິກອນ ແລະ ກ່ຽວຂ້ອງກັບການເສຍຊີວິດຂອງຜູ້ອາຍຸສູງຢ່າງໜ້ອຍ 44 ຄົນ" ແຕ່ສານຕັດສິນວ່າ ການເກີດໄພທຳມະຊາດຂະໜາດນີ້ ເປັນເລື່ອງຍາກຫຼາຍທີ່ຈະຄາດຄະເນລ່ວງໜ້າ.

ຢ່າງໃດກໍຕາມ, ສານກໍໄດ້ຕັດສິນໃນຄະດີແພ່ງເມື່ອເດືອນກໍລະກົດ 2022 ໃຫ້ຈຳເລີຍທັງ 3 ຕ້ອງຈ່າຍຄ່າຊົດເຊີຍ ເພື່ອຊົດເຊີຍທຸກຄົວເຮືອນທີ່ໄດ້ຮັບຜົນກະທົບ ມູນຄ່າທັງໝົດ 13 ພັນຕື້ເຢນ ຍ້ອນໄພທຳມະຊາດຄັ້ງນີ້ ສາມາດປ້ອງກັນໄດ້ດ້ວຍຄວາມລະມັດລະວັງ ແລະ ມີຄວາມເປັນມືອາຊີບ.

**ແຫຼ່ງຂ່າວ: REUTERS**

# IMF ຄາດຄະເນການເຕີບໂຕເສດຖະກິດໂລກຈະຫົດຖອຍລົງໃນປີນີ້



ການເຕີບໂຕເສດຖະກິດທົ່ວໂລກຈະຫົດຖອຍ ຢູ່ລະດັບ 2,7% ໃນປີ 2023 ແລ້ວຟື້ນຕົວໃນປີ 2024.

ນີ້ແມ່ນຂໍ້ສັງເກດຂອງຜູ້ອຳນວຍການໃຫຍ່ກອງທຶນເງິນຕາສາກົນ (IMF) ໄດ້ຍົກຂຶ້ນໃນເວທີປາໄສເສດຖະກິດໂລກ (WEF) ປີ 2023 ເຊິ່ງພວມດຳເນີນຢູ່ນະຄອນດາໂວສ ປະເທດສະວິດ.

ທ່ານໄດ້ຍົກໃຫ້ເຫັນສິ່ງທ້າທາຍໃຫຍ່ 3 ປະການສຳລັບເສດຖະກິດໂລກ ລວມມີ: ບັນຫາສົງຄາມ, ວິກິດການກ່ຽວກັບຄ່າໃຊ້ຈ່າຍ ແລະ ອັດຕາດອກເບ້ຍສູງຢູ່ໃນລະດັບບໍ່ເຄີຍມີມາກ່ອນໃນຫຼາຍທົດສະວັດ. ຕາມນັ້ນແລ້ວ, ໂລກຕ້ອງມີການດັດປັບ ເພື່ອຮັບປະກັນແຫຼ່ງສະໜອງແບບ "ອັດສະລິຍະ".

ກ່ຽວກັບຄວາມອາດສາມາດຂອງບັນດາທະນາຄານສູນກາງຫຼຸດອັດຕາດອກເບ້ຍນັ້ນ, ທ່ານຖືວ່າ ຍັງບໍ່ທັນຮອດຈຸດເວລານັ້ນເທື່ອ ເພາະວ່າອັດຕາເງິນເຟີ້ກຳລັງຫຼຸດລົງ ແຕ່ຍັງຢູ່ໃນລະດັບສູງຢູ່.

**ແຫຼ່ງຂ່າວ: vovworld.vn**



# ເຝົ້າເບິ່ງ ໄດ້ຍິນ

◆ ວິເສດ ສະແຫວງສຶກສາ

# ລະວັງເງົາມືດ ແຫ່ງຍຸກດີຈີຕອນ

ໃນຍຸກດີຈີຕອນ ເຊິ່ງເຕັກໂນໂລຊີຂໍ້ມູນຂ່າວສານ ກາຍເປັນກຳລັງຂັບເຄື່ອນທີ່ສຳຄັນນີ້ໄດ້ນຳເອົາຜົນປະໂຫຍດ ແລະ ຄວາມສະດວກສະບາຍອັນມະຫາສານມາສູ່ມວນມະນຸດ ແຕ່ພ້ອມດຽວກັນນັ້ນມັນກໍມາພ້ອມໆກັບເງົາມືດທີ່ເຊື່ອງຊ້ອນໄປດ້ວຍໄພອັນຕະລາຍຜົງໆກັນ. ຍ້ອນແນວນີ້ເອງ ຫຼາຍປະເທດຈຶ່ງໄດ້ເອົາມາດຕະການຕຽມພ້ອມເພື່ອປ້ອງກັນ ບໍ່ໃຫ້ເງົາມືດດັ່ງກ່າວ ປິດບັງສິ່ງດີໆທີ່ຈະໄດ້ຈາກເຕັກໂນໂລຊີລ້ຳຍຸກດັ່ງກ່າວ.

ຫວ່າງບໍ່ດົນມານີ້, ທ່ານ ອານໂຕນີໂອ ກູເຕເຣັດ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ (ສປຊ) ໄດ້ອອກມາເຕືອນຊາວໂລກໃຫ້ເຫັນຜົນຮ້າຍຈາກການເຜີຍແຜ່ຂໍ້ຄວາມທີ່ມີຈຸດປະສົງສ້າງຄວາມຄຽດຊັງ ໃນຮູບການຂົ່ມຂູໃສ່ຮ້າຍປ້າຍສີ ເຮັດຄົນກັບຄົນມີຄວາມອາຄາດບາດໝາງຕໍ່ກັນ. ຍ້ອນເຫັນໄດ້ກ່ຽວກັບຜົນຮ້າຍຂອງຖ້ອຍຄຳສ້າງຄວາມຄຽດຊັງລັງກຽດທີ່ເຜີຍແຜ່ຜ່ານໜ້າຈໍໃນຊຸມປີຜ່ານມາ ທາງອົງການ ສປຊ ຈຶ່ງໄດ້ຕົກລົງນຳບົດເອົາວັນທີ 18 ມິຖຸນາຂອງທຸກໆປີ ເປັນວັນສາກົນ ເພື່ອຕ້ານຖ້ອຍຄຳທີ່ສ້າງຄວາມຄຽດຊັງຕໍ່ກັນຜ່ານລະບົບອິນເຕີເນັດ, ທ່ານເລຂາທິການໃຫຍ່ອົງການ ສປຊ ມີຄຳເຫັນເຕືອນວ່າຖ້ອຍຄຳທີ່ສ້າງຄວາມຄຽດຊັງກັນໃນສັງຄົມນັ້ນ ຈະນຳໄປສູ່ການໃຊ້ຄວາມຮຸນແຮງ ເຊິ່ງຈະເປັນການທຳລາຍຄວາມຫຼາກຫຼາຍ ແລະ ຄວາມກົມກຽວປອງດອງໃນສັງຄົມ. ໃນໄລຍະການລະບາດຂອງພະຍາດໂຄວິດ-19, ຖ້ອຍຄຳບໍ່ດີດັ່ງກ່າວ ໄດ້ຈູດສະນວນຄວາມສ່ຽງ ແລະ ການຈຳແນກໃນລະດັບສູງ ຕໍ່ຊຸມຊົນສ່ວນນ້ອຍ ແລະ ກຸ່ມຄົນດ້ອຍໂອກາດ. ເພື່ອກຳຈັດຖ້ອຍຄຳທີ່ປອງຮ້າຍດັ່ງກ່າວ, ທຸກໆປະເທດຕ້ອງປະຕິບັດຫຼັກການເຄົາລົບເສລີພາບໃນການປາກເວົ້າ, ການສະແດງຄວາມຄິດເຫັນຂອງກັນແລະກັນ, ສົ່ງເສີມຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມໃນສັງຄົມ. ທ່ານເລຂາທິການໃຫຍ່ໄດ້ຍົກຕົວຢ່າງໃຫ້ເຫັນວ່າ ອາຊະຍາກຳຂັ້ນຮ້າຍແຮງທີ່ເກີດຂຶ້ນໃນຍຸກໃໝ່ນີ້ ລ້ວນແຕ່ມີຕົ້ນເຫດມາຈາກການລະບາດຂອງຖ້ອຍຄຳທີ່ຍຸຍົງ ສົ່ງເສີມໃຫ້ຄົນໃນສັງຄົມ-ໃນປະເທດກຽດຊັງກັນ. ການຂ້າລ້າງເຜົ່າພັນໃນປີ 1994 ທີ່ປະເທດຣວນດາ ເຊິ່ງມີຄົນເສຍຊີວິດເກືອບ 1 ລ້ານຄົນນັ້ນ ກໍມີສາເຫດມາຈາກຖ້ອຍຄຳອຸບາດດັ່ງກ່າວຫັ້ນລະ.

ຢູ່ຫວຽດນາມ ເຄື່ອງມືຊາດທຳອິດ ທີ່ນຳໃຊ້ເພື່ອປ້ອງກັນອາຊະຍາກຳທາງອິນເຕີເນັດ (ເອີ້ນວ່າ: ອາຊະຍາກຳທາງໄຊເບີ) ນັ້ນ ກໍຄືດຳລັດນາຍົກລັດຖະມົນຕີ ເພື່ອຄຸ້ມຄອງສື່ລະບົບສື່ສັງຄົມ ທີ່ປະກາດໃຊ້ໃນປີ 2013 ແລະ ໄດ້ຮັບການປັບປຸງຄືນໃໝ່ໃຫ້ເຂັ້ມງວດຂຶ້ນຕື່ມໃນຕົ້ນປີ 2020. ພາຍໃຕ້ດຳລັດດັ່ງກ່າວ, ຜູ້ລະເມີດຈະຖືກປັບໃໝສູງຂຶ້ນ ຄືລະຫວ່າງ 10-20 ລ້ານດົ່ງ ເຊິ່ງເທົ່າກັບ 430-860 ໂດລາສະຫະລັດ (ອັດຕາແລກປ່ຽນປີ 2020). ການກະທຳທີ່ຖືວ່າເປັນຄວາມຜິດນັ້ນໄດ້ແກ່ການເຜີຍແຜ່ຂ່າວປອມ, ຂ່າວບິດເບືອນ, ຂໍ້ຄວາມໃສ່ຮ້າຍປ້າຍສີເພື່ອທຳລາຍຊື່ສຽງ ແລະ ກຽດສັກສີຂອງສ່ວນບຸກຄົນ, ການແບ່ງປັນ ຫລື ສິ່ງຕໍ່ຂ່າວເສກສັນປັ້ນແຕ່ງທີ່ສ້າງຄວາມສັບສົນໃນສັງຄົມ ແລະ ນຳໄປສູ່ການໃຊ້ຄວາມຮຸນແຮງ. ນອກຈາກນັ້ນ ດຳລັດຍັງໄດ້ກຳນົດໂທດຕໍ່ຜູ້ເຜີຍແຜ່ຂໍ້ຄວາມສະໜັບສະໜູນຮີດຄອງປະເພນີຫຼ້າຫຼັງ, ການເຊື່ອຖືແບບງົມງວາຍ, ການກະທຳທີ່ລາມົກ, ການເຜີຍແຜ່ຂໍ້ມູນລະອຽດກີກີ່ກ່ຽວກັບເຫດການສະຫຍອງຂວັນ (ການຄາດຕະກຳ, ອຸບປະຕິເຫດ...) ການເຜີຍແຜ່ບົດຂຽນ-ບົດວັນນະຄະດີ ໂດຍບໍ່ໄດ້ຮັບລິຂະສິດ, ການໂຄສະນາສິນຄ້າ ຫຼື ການບໍລິການທີ່ຕ້ອງຫ້າມ, ການເຜີຍແຜ່ຄວາມລັບຂອງຊາດຂອງສ່ວນບຸກຄົນ ກໍຄືການເຜີຍແຜ່ແຜນທີ່ຫວຽດນາມ ທີ່ບໍ່ຖືກຕ້ອງຄົບຖ້ວນ ແລະ ຊັດເຈນ. ບົດຄວາມນີ້ໄດ້ແຫຼ່ງຂໍ້ມູນຈາກຂ່າວຕ່າງປະເທດໃນວັນທີ 18 ມິຖຸນາ 2020 ແລະ ໜັງສືພິມ Vientiane Times ສະບັບວັນທີ 7 ກຸມພາ 2020.

| ຄຳຖືກ | ຄຳຜິດ |
|---|---|
| ຕິດຂັດດຽກ | ຕິດຄັດດຽກ |
| ຕິດຄັດເອກະສານ | ຕິດຂັດເອກະສານ |
| ແນວຄິດສ້າງສັນ | ແນວຄິດສ້າງສັນ |
| ພົບປະສັງສັນ | ພົບປະສັງສັນ |
| ຂອບໃຈ | ຄອບໃຈ |
| ໄປມາລາຄອບ | ໄປມາລາຂອບ |
| ສັບຊ້ອນພະນັກງານ | ຊັບຊ້ອນພະນັກງານ |
| ບັນຫາຊັບຊ້ອນ | ບັນຫາສັບຊ້ອນ |


ສອນພາສາ ຜ່ານສຽງຫົວ

# ລ້ຽງດູຄອບຄົວ

*#ບ່າວກະບື*

ຄົນຜ່ານທາງຜູ້ໜຶ່ງ ໂຍນໃບຫ້າພັນກີບໃຫ້ຄົນຂໍທານ, ຄົນຂໍທານຈື່ຊາຍຄົນນັ້ນໄດ້ ຈຶ່ງເອີ້ນໃສ່ ແລະ ຖາມເຂົາວ່າ: "ທ່ານເອີຍ, ຄາວກ່ອນ ທ່ານເຄີຍເອົາໃບຊາວພັນກີບໃຫ້ຂ້ານ້ອຍ, ຕໍ່ມາທ່ານເລີ່ມເອົາໃບສິບພັນໃຫ້ ແລະ ມື້ນີ້ ເປັນຫຍັງຄືມີໃບຫ້າພັນກີບ?"

ຊາຍຄົນນັ້ນອະທິບາຍເຫດຜົນວ່າ: "ຄືຈັ່ງຊີ້ນ້ອງຊາຍ... ທຳອິດເຮົາຢູ່ຄົນດຽວ ແລະ ມີລາຍໄດ້ພຽງພໍ ສະນັ້ນ ຈຶ່ງໃຫ້ໂຕຊາຍພັນກີບ, ຕໍ່ມາເຮົາແຕ່ງດອງ ແລະ ລາຍຈ່າຍກໍເພີ່ມຂຶ້ນ ດັ່ງນັ້ນ ຈຶ່ງໃຫ້ໂຕສິບພັນກີບ, ດຽວນີ້ ເຮົາໄດ້ລູກ ດັ່ງນັ້ນຈຶ່ງໃຫ້ໂຕຫ້າພັນກີບ."

ຄົນຂໍທານຖາມດ້ວຍສຽງຮ້າຍໆອອກມາວ່າ: "ເຈົ້າລ້ຽງລູກລ້ຽງເມຍເຈົ້າ ເຫດໃດຈຶ່ງມາແກ່ນຂ້ອຍ?"

# BRINGING UP FAMILY

*#BAOKBU*

A passerby threw a five thousand kip note to a beggar. The beggar, recognizing the man, called him and asked: "Sir, earlier you.used to give me twenty thousand kips, then you started giving me ten thousand kips and today what is this only five thousand kips?"

The man explained the reason: "Brother, first I was alone and had enough income - That's why I gave you twenty thousand kips. Then I got married and expenses multiplied hence, ten thousand kips. Now I have a child-that's why five thousand kips.

The beggar asked in an irritated voice: "Why are you looking after your wife and childat my expense?"

ຄານກາຕູນ



ການບັນທຸກທີ່ທຸກຕາທຸກໃຈຜູ້ພົບເຫັນ

● ໂດຍ : ສາວສົ້ນແຕ້ມ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສີງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ